# ພາກທີ III ໂຄງປະກອບຂອງບົດຂ່າວ

## ສິ່ງທ້າທາຍ

ນັກຂ່າວຫລາຍຄົນເວົ້າວ່າ ສິ່ງທີ່ຍາກທີ່ສຸດໃນການຂຽນຂ່າວ ແມ່ນການຕັດສິນໃຈວ່າຈະເລີ່ມຕົ້ນແນວໃດ. ຄຳເວົ້າທຳອິດຂອງຂ່າວ ແມ່ນເລື່ອງສຳຄັນທີ່ສຸດ. ຖ້າຫາກວ່າວັກນຳເປັນໜ້າສົນໃຈ ຜູ້ອ່ານຈະຢາກອ່ານເລື່ອງຈົນສຸດ ແຕ່ຖ້າບໍ່ໜ້າສົນໃຈແລ້ວ ຜູ້ອ່ານກໍ່ຈະເປີດໄປໜ້າໃໝ່.

ເມື່ອທ່ານຕັດສິນໃຈວ່າຈະຂຽນວັກນຳແນວໃດແລ້ວ ສິ່ງທ້າທາຍຕໍ່ໄປກໍ່ຄື ການຈັດລຽງສ່ວນທີ່ເຫລືອຂອງຂ່າວ. ທ່ານຈະຈັດລຽງຂໍ້ມູນໃຫ້ເປັນລະບຽບແນວໃດ ເພື່ອໃຫ້ອ່ານຂ່າວງ່າຍທີ່ສຸດ? ແມ່ນແຕ່ນັກຂຽນທີ່ມີປະສົບການຫລາຍທີ່ສຸດ ກໍ່ຍັງມີບັນຫາໃນການຈັດລຽງ. ເຂົາເຈົ້າຮວບຮວມຂໍ້ມູນໄວ້ເປັນຈຳນວນຫລວງຫລາຍ ຈຶ່ງເຮັດໃຫ້ຕັດສິນໄດ້ຍາກວ່າ ຄວນຈະໃຊ້ຂໍ້ມູນໃດແລະບໍ່ໃຊ້ຂໍ້ມູນໃດ.

ຢູ່ໃນຂ່າວລັກສະນະສາລະຄະດີ ຕອນຈົບຂອງເລື່ອງກໍ່ມີຄວາມສຳຄັນເຊັ່ນດຽວກັນ. ນັກຂຽນບາງຄົນຂຽນຕອນຈົບ ດ້ວຍຂໍ້ມູນທີ່ມີຄວາມສຳຄັນຫລາຍທີ່ສຸດ. ສ່ວນອີກຈຳນວນໜຶ່ງມັກຖິ້ມທ້າຍໃຫ້ຜູ້ອ່ານມີຄວາມປະທັບໃຈຢ່າງແຮງກ້າກ່ຽວກັບຫົວເລື່ອງ. ບາງເທື່ອກໍ່ຍົກເອົາຄຳເວົ້າອ້າງອີງທີ່ໜັກແໜ້ນມາອັດທ້າຍ. ການຊອກຫາວິທີຈົບຂ່າວທີ່ຖືກຕ້ອງນັ້ນຍາກຄືກັນ.

## ຂັ້ນຕອນການຂຽນ

ການຂີດຂຽນບໍ່ແມ່ນຂະບວນການທີ່ເລີ່ມຕົ້ນຈາກຕອນທີ່ນັກຂ່າວນັ່ງລົງຕໍ່ໜ້າພິມດີດຫລືຄອມພິວເຕີ. ການຂີດຂຽນແມ່ນການຄິດ ຊຶ່ງເລີ່ມຕົ້ນທັນທີທີ່ນັກຂ່າວຄິດອອກກ່ຽວກັບເລື່ອງທີ່ຈະຂຽນ ແລະເດີນເລື່ອງຕໍ່ໄປຕາມຂັ້ນຕອນຂອງການລາຍງານຂ່າວ ຄື: ຊອກຫາຈຸດສົນໃຈ, ການຖາມແລະຮວບຮວມລາຍລະອຽດ. ໃນຂະນະຮວບຮວມຂໍ້ມູນນັ້ນ ກໍ່ຄິດໄປນຳພ້ອມແລະວິເຄາະວິໄຈເບິ່ງວ່າຂໍ້ມູນໃດໃຊ້ໄດ້ແລະຕ້ອງຕັດສິນໃຈວ່າຂໍ້ມູນໃດກ່ຽວຂ້ອງກັບຂ່າວແລະສ່ວນໃດບໍ່ກ່ຽວຂ້ອງ. ສຸດທ້າຍ ຈຶ່ງເອົາຂໍ້ມູນມາລຽງລຳດັບໃຫ້ຜູ້ອ່ານເຂົ້າໃຈໄດ້ງ່າຍ.

ໃນການຂຽນເລື່ອງໃຫ້ໄດ້ດີນັ້ນ ແມ່ນການລາຍງານໃຫ້ດີ. ຖ້າຫາກມີບັນຫາໃນການຂຽນ ສ່ວນຫລາຍແລ້ວມັກເປັນຍ້ອນທ່ານບໍ່ໄດ້ໂອ້ລົມບຸກຄົນຕ່າງໆຢ່າງພຽງພໍ ຫລືບໍ່ໄດ້ຮວບຮວມຂໍ້ມູນພຽງພໍ. ຖ້າທ່ານບໍ່ເຮັດລາຍງານພຽງພໍ ຄວາມຄິດຂອງທ່ານກໍ່ຈະບໍ່ຊັດເຈນ.

# ບົດທີ 8
# ວັກນຳ

ວັກນຳມີສອງປະເພດຄື: ວັກນຳແບບກົງແລະວັກນຳແບບອ້ອມຄ້ອມ.

ວັກນຳແບບກົງບອກເລື່ອງແລະປະເດັນຫລັກໃຫ້ຜູ້ອ່ານທັນທີໂລດ ຢູ່ໃນປະໂຫຍກທຳອິດ.

ວັກນຳແບບອ້ອມຄ້ອມມັກຈະເລີ່ມດ້ວຍສະເກັດຂ່າວ (ເລື່ອງສັ້ນໆ)ຫລືຕົວຢ່າງຂອງບຸກຄົນຢູ່ໃນສະຖານະການ

ໃດໜຶ່ງຫລືເປີດສາກ. ສິ່ງເຫລົ່ານີ້ສະແດງໃຫ້ເຫັນປະເດັນສຳຄັນຂອງຂ່າວ ຫລືເຮັດໃຫ້ເກີດອາລົມສຳລັບຂ່າວ. ຕໍ່ມາ ນັກຂຽນຈຶ່ງຈະບອກຜູ້ອ່ານໂດຍກົງວ່າ ປະເດັນສຳຄັນຂອງຂ່າວແມ່ນຫຍັງ.

ຈະໃຊ້ວັກນຳແບບໃດ ສ່ວນໃຫຍ່ຂຶ້ນຢູ່ກັບວ່າ ທ່ານຈະຂຽນຂ່າວສະຖານະການຫລືວ່າຂ່າວລັກສະນະສາລະຄະດີ.

## ວັກນຳແບບກົງ

ວັກນຳແບບກົງເໝາະສົມທີ່ສຸດສຳລັບຂ່າວສະຖານະການ ຊຶ່ງມັກຈະປະກອບດ້ວຍຂໍ້ມູນທີ່ມີຄວາມສຳຄັນທີ່ສຸດຄື ເກີດເຫດການຫຍັງຂຶ້ນ ເຊັ່ນ ຄຳຖາມ 5W ແລະ H ຊຶ່ງມີຄວາມສຳຄັນທີ່ສຸດ. ວັກນຳດີທີ່ສຸດນັ້ນຈະຂຽນດ້ວຍໂຄງຮ່າງປະໂຫຍກ: ປະທານ - ກິລິຍາ - ໂຕກຳ ຊຶ່ງໄດ້ເວົ້າມາແລ້ວ. ໃນພາສາອັງກິດ ວັກນຳຂອງຂ່າວສະຖານະການບໍ່ຄວນໃຫ້ເກີນ 25 ຄຳ ແລະຕ້ອງໃຫ້ຊັດເຈນແລະກະທັດຮັດ.

ລອງມາເບິ່ງວັກນຳຈາກໜັງສືພິມ *ວຽງຈັນທາຍມ໌* ຢູ່ໃນປະເທດລາວ.

> *ລັດຖະບານຍີ່ປຸ່ນຕົກລົງທີ່ຈະໃຫ້ທຶນກໍ່ສ້າງເສັ້ນທາງຊົນນະບົດຢູ່ແຂວງຫົວພັນ ຊຶ່ງແມ່ນສ່ວນໜຶ່ງໃນການລະດົມຂົນຂວາຍເພື່ອຫລຸດຜ່ອນການປູກຝິ່ນ.*

ວັກນຳນີ້ປະກອບດ້ວຍຄຳຖາມ ໃຜ (ລັດຖະບານຍີ່ປຸ່ນ) ເຮັດຫຍັງ (ຕົກລົງທີ່ຈະໃຫ້ທຶນໃນການກໍ່ສ້າງເສັ້ນ

ທາງຢູ່ຊີນນະບົດ) ຢູ່ໃສ (ຢູ່ແຂວງຫົວພັນ) ແລະເພື່ອຫຍັງ (ເພື່ອຫລຸດຜ່ອນການປູກຝິ່ນ).

ວັກນຳນີ້ເອົາມາຈາກໜັງສືພິມ *ບາງກອກໂພສຕ໌:*

> *ມື້ວານນີ້ ກົມໄປສະນີແລະໂທລະເລກບໍ່ອະນຸຍາດໃຫ້ບໍລິສັດເວີລດ໌ສະຕາຣ໌ທີວີແຜ່ພາບທາງໂທລະພາບຈຳນວນ 36 ຊ່ອງດ້ວຍລະບົບດີຈີຕອລ.*

ວັກນຳປະກອບດ້ວຍຄຳຖາມ ໃຜ (ກົມໄປສະນີໂທລະເລກແລະບໍລິສັດເວີລດ໌ສະຕາຣ໌ທີວີ) ເຮັດຫຍັງ (ບໍ່ອະນຸຍາດໃຫ້ແຜ່ພາບ) ແລະຍາມໃດ (ມື້ວານນີ້).

## ວັກນຳແບບອ້ອມຄ້ອມ



*ເອົາເລື່ອງລາວຂອງແຮງງານເດັກຜູ້ໜຶ່ງໃນບັນດາເດັກນ້ອຍເຫລົ່ານີ້ມາຂຽນວັກນຳໄດ້*

ວັກນຳແບບອ້ອມຄ້ອມເໝາະສົມສຳລັບຂ່າວລັກສະນະສາລະຄະດີ. ນັກຂຽນມັກເລີ່ມຕົ້ນດ້ວຍຕົວຢ່າງທີ່ໜ້າສົນໃຈ ອາດເປັນເລື່ອງລາວສັ້ນໆກ່ຽວກັບບຸກຄົນຫລືເຫດການ ເພື່ອໃຫ້ເຫັນພາບປະເດັນສຳຄັນຂອງຂ່າວ ຊຶ່ງເປັນການຊັກນຳຜູ້ອ່ານເຂົ້າສູ່ເລື່ອງ.

ແຕ່ເວລາໃຊ້ວັກນຳແບບອ້ອມຄ້ອມນັ້ນ ສິ່ງສຳຄັນຕ້ອງຊັກນຳຜູ້ອ່ານເຂົ້າສູ່ປະເດັນຂ່າວຢູ່ໃນສອງສາມຫຍໍ້

ໜ້າທຳອິດ ຖ້າບໍ່ດັ່ງນັ້ນ ຜູ້ອ່ານກໍ່ຈະສົງໄສວ່າ ທ່ານກຳລັງເວົ້າເລື່ອງຫຍັງແລະເປັນຫຍັງຜູ້ອ່ານຈຶ່ງຕ້ອງອ່ານຂ່າວນີ້.

ແນ່ນອນແລ້ວ ເຮົາອາດເລີ່ມຕົ້ນຂ່າວລັກສະນະສາລະຄະດີດ້ວຍປະເດັນຫລັກ ແທນທີ່ຈະເລີ່ມຕົ້ນດ້ວຍຕົວຢ່າງ, ສະເກັດຂ່າວຫລືສາກໃດສາກໜຶ່ງ. ແຕ່ປົກກະຕິມັກຈະບໍ່ໄດ້ຜົນ ເພາະບໍ່ແມ່ນເລື່ອງສະເພາະເຈາະຈົງ ແລະບໍ່ງ່າຍສຳລັບຜູ້ອ່ານທີ່ຈະເຂົ້າໃຈເລື່ອງໄດ້.

ສຳລັບຂ່າວກ່ຽວກັບແມ່ຍິງຄົນໜຶ່ງ ຊຶ່ງເວົ້າວ່ານາງໄດ້ພົບລູກສາວທີ່ສູນຫາຍໄປ ໜັງສືພິມ *ເດີ ເນຊັນ* ຂອງໄທເລືອກຂຽນວັກນຳແບບອ້ອມຄ້ອມດັ່ງນີ້:

> *ນາງທວດ ສູແສງອາຍຸ 31 ປີ ບໍ່ຈື່ເດັກຍິງຜູ້ຈ່ອຍຜອມແລະເປື້ອນເປິ ທີ່ກຳລັງເລາະຂໍທານຕາມຖະໜົນເມືອງພູເກັດອາທິດຜ່ານມາ ແຕ່ມີບາງຢ່າງທີ່ເຮັດໃຫ້ນາງຕ້ອງຢຸດແລະເອົາເງິນຫລຽນສິບຢື່ນບາດໃຫ້.*
>
> *ເດັກນ້ອຍຄົນນີ້ຈ້ອງເບິ່ງໜ້ານາງແລະບໍ່ໃສ່ໃຈນຳເງິນເລີຍ.*
>
> *"ແມ່ບໍ່?" ເດັກນ້ອຍເວົ້າສຽງຄ່ອຍໆ ພ້ອມທັງນ້ຳຕາໄຫລອາບແກ້ມທີ່ເປື້ອນເປິ.*
>
> *ຄຳເວົ້າຄຳດຽວນີ້ແມ່ນໂອກາດໜຶ່ງໃນລ້ານ ທີ່ເຮັດໃຫ້ສອງຊີວິດໄດ້ມາພົບພໍ້ກັນ ຫລັງຈາກທີ່ການພັດພາກຈາກກັນເປັນເວລາສາມປີໄດ້ສິ້ນສຸດລົງ.*
>
> *ເຈົ້າໜ້າທີ່ຕຳຫລວດ ຊຶ່ງໄດ້ຮັບແຈ້ງຈາກນາງທວດເວົ້າວ່າ: "ເມື່ອພວກເຮົາໄປຮອດບ່ອນທັ້ນ ແມ່ແລະລູກສາວຍັງກອດກັນແລະຮ້ອງໄຫ້ໃສ່ກັນຢູ່."*
>
> *ສາມປີກ່ອນ ເກສອນ ມັນພູກອາຍຸເຈັດຂວບ*

> *ຖືກໂຈນກຳປູເຈຍລັກພາໂຕໄປຈາກເຮືອນພີ່ນ້ອງຢູ່ແຂວງຂອນແກ່ນ. ນາງຫວດຫົວໃຈແທບແຕກສະຫລາຍ ພະຍາຍາມຊອກຫາລູກສາວດ້ວຍຄວາມຫວັງເລື່ອນລອຍ ແລ້ວໃນທີ່ສຸດກໍ່ເລີກລົ້ມຄວາມຫວັງທີ່ຈະໄດ້ພົບລູກນ້ອຍຂອງຕົນອີກ.*

ນັກຂຽນເລີ່ມຕົ້ນດ້ວຍການພົບພໍ້ກັນໂດຍບັງເອີນຢູ່ຖະໜົນ ຕໍ່ຈາກນັ້ນ ຈຶ່ງເຂົ້າຫາປະເດັນສຳຄັນ ຄື:ແມ່ຊອກຫາລູກສາວນ້ອຍທີ່ຖືກລັກພາຕົວໄປເປັນເວລາດົນນານ.

ຖ້າທ່ານຂຽນຂ່າວນີ້ໂດຍໃຊ້ວັກນຳແບບກົງ ກໍ່ອາດຈະຂຽນໃນລັກສະນະນີ້:

> *ອາທິດແລ້ວນີ້ ແມ່ຍິງຄົນໜຶ່ງຊຶ່ງອອກຕາມຫາລູກສາວທີ່ສູນຫາຍໄປເປັນເວລາສາມປີ ໄດ້ພົບລູກສາວຂອງນາງກຳລັງເລາະຂໍທານຢູ່ຕາມຖະໜົນເມືອງພູເກັດ.*

ແຕ່ວ່າການຂຶ້ນຕົ້ນແບບນີ້ມີຜົນໜ້ອຍກວ່າ.

ວິທີທົ່ວໄປໃນການຂຽນຂ່າວລັກສະນະສາລະຄະດີກ່ຽວກັບທ່າອ່ຽງ, ໄພພິບັດຫລືສິ່ງທີ່ມີຜົນກະທົບຕໍ່ຜູ້ຄົນຈຳນວນຫລວງຫລາຍ ຄືການເລີ່ມຕົ້ນດ້ວຍເລື່ອງສັ້ນໆກ່ຽວກັບຜູ້ໃດຜູ້ໜຶ່ງໃນບັນດາຄົນທີ່ໄດ້ຮັບຜົນກະທົບ.

*ໜັງສືພິມພະນົມເປັນໂພສຕ໌ (Phnom Penh Post)* ເຮັດຂ່າວລັກສະນະສາລະຄະດີກ່ຽວກັບຄອບຄົວທຸກຍາກ ທີ່ເດີນທາງໄປແຂວງຣັດຕະນະຄີຣີໃນກຳປູເຈຍເພື່ອເຮັດວຽກທີ່ສ່ຽງອັນຕະລາຍຢູ່ບ່ອນຂຸດແກ້ວ. ຂ່າວເລີ່ມຕົ້ນດ້ວຍການພັນລະນາພາບຄົນຜູ້ໜຶ່ງກຳລັງຊອກອັນໃດອັນໜຶ່ງຢູ່:

> *ເລີກລົງໄປຈາກໜ້າດິນ 15 ແມັດ ຢູ່ໃນອູບມຸງ ແຄບໆ ສິ່ງທີ່ປຸຍຢ້ານທີ່ສຸດຄືແສງທຽນອ່ອນໆທີ່ເຂົາຖືຢູ່ຈະດັບມອດລົງ ເຮັດໃຫ້ເຂົາຕົກຢູ່ໃນຄວາມມືດມິດພຽງລຳພັງ.*

ວິທີທຳມະດາອີກວິທີໜຶ່ງ ໃນການຂຽນຂ່າວລັກສະນະສາລະຄະດີຄືການສ້າງເປັນສາກ.

ເບິ່ງຕົວຢ່າງວັກນຳທີ່ພວກເຮົາເຫັນຢູ່ໃນບົດທີ 5 ດ້ວຍການສັງເກດອີກຕື່ມເທື່ອໜຶ່ງ:

> ***ຊຽງໃໝ່, ປະເທດໄທ*** *- ເມື່ອບໍ່ດົນມານີ້ ປະຊາຊົນໄດ້ພາກັນມາເຕົ້າໂຮມຢູ່ປະຕູທ້າແຫ່ງຂອງເມືອງຊຽງໃໝ່ທີ່ເກົ່າແກ່ ເພື່ອທຳພິທີບູຮານເອີ້ນວ່າອິນທະຂິນ. ພະສົງຄຸມຜ້າເຫລືອງພາກັນສູດມົນ ສ່ວນປະຊາຊົນກໍ່ເອົາດອກໄມ້ທູບທຽນມາບູຊາໄຫວ້ວອນຂໍຝົນແລະຂໍໃຫ້ພືດຜົນອຸດົມສົມບູນ.*
>
> *ແຕ່ວ່າ ສຽງແກແລະສຽງລົດແອອັດກັນຢູ່ອ້ອມແອ້ມປະຕູເມືອງ ໄດ້ລົບກວນສຽງສູດມົນ ສ່ວນຄວັນລົດຍົນແລະລົດຈັກກໍ່ຂືວກຸ້ມກົບເອົາກິ່ນຫອມຂອງທູບທຽນໄປຈົນໝົດ.*

ຍັງມີວັກນຳທີ່ມີລັກສະນະສົນທະນາ ຊຶ່ງເຮັດໃຫ້ຜູ້ອ່ານຄິດແລະສົນໃຈໄດ້.

ຕົວຢ່າງ ການເລີ່ມຕົ້ນຂ່າວຂອງໜັງສືພິມ *ເດີະ ເນຊັນ:*

> *ລອງວາດພາບເບິ່ງວ່າ ຖ້າຫາກກຸງເທບບໍ່ມີເສົາໄຟຟ້າແລະສາຍໂທລະສັບຈະເປັນແນວໃດ.*

*ພາບດັ່ງກ່າວ ເຖິງຈະເປັນສິ່ງທ້າທາຍກົດໝາຍ ແຕ່ກໍ່ອາດຈະກາຍເປັນຈິງໄດ້ໃນອີກບໍ່ດົນ. ພວກເຮົາຕ້ອງຂອບໃຈນຳແຜນງານອັນທະເຍີທະຍານຂອງກຸງເທບມະຫານະຄອນ(ກທມ).*

*ກທມ ອາດຈະຕົກລົງເຮັດສັນຍາກັບບໍລິສັດກໍ່ສ້າງ ໂປຣ - ໄດຟ໌ ອິງຄ໌ຂອງອາເມຣິກາ ໃນການຮັບເໝົາກໍ່ສ້າງອູບມຸງໃໝ່ ເພື່ອຍ້າຍສາຍໂທລະສັບແລະສາຍໄຟຟ້າໄປໄວ້ໃນພື້ນດິນ. ໂຄງການນີ້ແມ່ນສ່ວນໜຶ່ງຂອງແຜນງານຂອງກທມ ເພື່ອເຮັດໃຫ້ຂອບຟ້າກຸງເທບສະອາດງາມຕາແລະສວຍສົດງົດງາມ.*

## ຢ່າ "ເຊື່ອງ" ວັກນຳ

ໃນການຂຽນຂ່າວສະຖານະການ ນັກຂ່າວຫລາຍຄົນບໍ່ສາມາດຂຶ້ນຕົ້ນດ້ວຍປະເດັນຫລືແງ່ມຸມສຳຄັນ ຕົວຢ່າງ: ນັກຂ່າວເລີ່ມຂຽນຂ່າວກ່ຽວກັບກອງປະຊຸມ ໂດຍເວົ້າວ່າມີໃຜແດ່ມາເຂົ້າຮ່ວມກອງປະຊຸມ ແທນທີ່ຈະເວົ້າວ່າ ຢູ່ຫັ້ນມີການເຄື່ອນໄຫວຫຍັງແດ່. ເວົ້າແນວໜຶ່ງກໍ່ແມ່ນເຂົາເຈົ້າ "ເຊື່ອງ" ຂ່າວໄວ້ເລິກ.

ລອງມາເບິ່ງຂ່າວ ຈາກໜັງສືພິມພາສາອັງກິດສະບັບໜຶ່ງຢູ່ໃນປະເທດລາວ:

*ທ່ານ ບຸນຄຳ ພິມມະຈັກ ຫົວໜ້າພະແນກກະສິກຳແລະປ່າໄມ້ແຂວງບໍລິຄຳໄຊລາຍງານວ່າ ຊາວນາຢູ່ໃນແຂວງໄດ້ເລີ່ມລົງມືເກັບກ່ຽວເຂົ້ານາປີໃນເດືອນຕຸລາ.*

*ມາຮອດປັດຈຸບັນນີ້ ການເກັບກ່ຽວໄດ້ສຳເລັດ*

*ໄປແລ້ວ 19.530 ເຮັກຕາ (ເທົ່າກັບ80 ເປີເຊັນ) ຂອງ ເນື້ອທີ່ທັງໝົດ 24.792 ເຮັກຕາ.*

ເມື່ອເອົາມາຂຽນໃໝ່ຈະໄດ້ຂ່າວລັກສະນະນີ້:

*ພະນັກງານຜູ້ໜຶ່ງເວົ້າວ່າ ຊາວນາຢູ່ໃນແຂວງບໍລິຄໍາໄຊໄດ້ເກັບກ່ຽວເຂົ້ານາປີເກືອບ 80 ເປີເຊັນແລ້ວ.*

*ທ່ານ ບຸນຄໍາ ພົມມະຈັກ ຫົວໜ້າພະແນກກະສິກໍາແລະປ່າໄມ້ແຂວງບໍລິຄໍາໄຊເວົ້າວ່າ ຊາວນາໄດ້ເກັບກ່ຽວເຂົ້າແລ້ວປະມານ 19.530 ເຮັກຕາ ໃນຈໍານວນເນື້ອທີ່ທັງໝົດ 24.792 ເຮັກຕາ.*

ຂ່າວທີ່ຂຽນຂຶ້ນໃໝ່ນີ້ເຮັດໃຫ້ອ່ານວັກນໍາໄດ້ງ່າຍຂຶ້ນ ໂດຍເອົາຊື່ແລະຕໍາແໜ່ງທີ່ຍາວຂອງພະນັກງານຜູ້ນັ້ນອອກ. ນອກຈາກນັ້ນ ຍັງເນັ້ນໜັກໃສ່ຂ່າວ ຄືການເກັບກ່ຽວ ແທນທີ່ຈະເນັ້ນໃສ່ພະນັກງານລັດຊຶ່ງແມ່ນແຫລ່ງຂ່າວ. ຂ່າວຕອນຫລັງເນັ້ນສະເພາະເຈາະຈົງ (ໄດ້ເກັບກ່ຽວແລ້ວ 80 ເປີເຊັນ)ແທນທີ່ຈະເວົ້າລວມໆ (ເລີ່ມຕົ້ນລົງມືເກັບກ່ຽວ).

ມາເບິ່ງຂ່າວໜຶ່ງຂອງໜັງສືພິມພາສາກໍາປູເຈຍວ່າຂຶ້ນຕົ້ນແນວໃດ. “ສາຍຮັດແອວ” ໝາຍເຖິງສາຍຮັດທີ່ຄົນກໍາປູເຈຍຫລາຍຄົນໃສ່ ເພາະເຊື່ອວ່າເປັນການປ້ອງກັນຕົວເອງ.

*ໂອ້ ບັດຕໍາບອງທີ່ຮັກ ! ອັນນີ້ແມ່ນເພງທີ່ມີຊື່ສຽງຊຶ່ງທ່ານ ສິນ ສີສະໝຸດເປັນຄົນຮ້ອງໃນຊຸມປີ 60 ແລະ 70. ນັບຕັ້ງແຕ່ຍຸກສັງຄົມນິຍົມ* ***(Sangkum***

**Reastr Niyum)**ຈົນມາຮອດປັດຈຸບັນ ມີຜູ້ຊາຍຄົນໃດແດ່ທີ່ບໍ່ຢາກໄປເປັນເຈົ້າແຂວງບັດຕຳບອງ ? ມີຕຳຫລວດສາລະວັດແລະເຈົ້າໜ້າທີ່ຄົນໃດແດ່ ທີ່ບໍ່ຢາກມີຕຳແໜ່ງຢູ່ແຂວງບັດຕຳບອງ ? ເນື່ອງຈາກວ່າບັດຕຳບອງແມ່ນສູນກາງເສດຖະກິດໃຫຍ່ທີ່ສຸດຖັດຈາກພະນົມເປັນ, ກຳປົງຈາມ ກໍ່ຄືກຳປົງໂສມ. ແຕ່ວ່າຜູ້ທີ່ຢາກໄປ ສ່ວນໃຫຍ່ມັກຈະບໍ່ໄດ້ໄປ ສ່ວນຜູ້ທີ່ສາມາດໄປໄດ້ຕ້ອງມີສາຍຣັດແອວ ເວົ້າລວມແລ້ວພວກເຂົາເຈົ້າຕ້ອງມີເງິນໂດລາ ສຳລັບຈ່າຍໃຫ້ບັນດາກຸ່ມຜູ້ມີອິດທິພົນທັງຫລາຍ ເພື່ອໃຫ້ຕົນເອງມີໂອກາດ. ແຕ່ວ່າສະໄໝທີສອງນີ້ ບໍ່ແມ່ນຈະຫາໄດ້ງ່າຍເໝືອນສະໄໝທຳອິດ ເພາະວ່າ ໃນເວລານີ້ ຢູ່ບັດຕຳບອງພວມມີບັນຫາຮ້າຍແຮງດ້ານຄວາມປອດໄພຖັດຈາກພະນົມເປັນ ເກືອບວ່າແຕ່ລະມື້ ຈະມີການປຸ້ນຈີ້ແລະຂ້າກັນຕາຍ ທັງເປັນເລື່ອງຍາກທີ່ຈະລະງັບເຫດການເກີດຂຶ້ນໄດ້ ເພາະວ່າກຸ່ມບັນດາອິດທິພົນທັງຫລາຍ ລ້ວນແລ້ວແຕ່ແມ່ນລູກຫລານຂອງພະນັກງານແຂວງແລະກະຊວງທະບວງກົມ.

ຂໍ້ມູນ (ຢູ່ໃນໜັງສືພິມ) ໄດ້ມາຈາກນັກຂ່າວທ້ອງຖິ່ນ ຊຶ່ງປະຈຳຢູ່ແຂວງບັດຕຳບອງລາຍງານວ່າ ໃນຕອນຄ່ຳຂອງວັນທີ 31 ກໍລະກົດ ເວລາປະມານ 22:00 ໂມງ ມີຄົນແກວ່ງລະເບີດໃສ່ຫລັງຄາຂອງບາເຕັ້ນລຳບຸບຜາທິບ. ລູກລະເບີດຕົກລົງພື້ນດິນແລ້ວແຕກຂຶ້ນ ເຮັດໃຫ້ຕຳຫລວດຄົນໜຶ່ງເສຍຊີວິດ, ຫ້າຄົນໄດ້ຮັບບາດເຈັບ ນອກຈາກນັ້ນ ຍັງມີປະຊາຊົນອີກຫ້າຄົນທີ່ຢູ່ໃກ້ຄຽງໄດ້ຮັບບາດເຈັບອີກນຳ.



*ຜູ້ໃດກໍ່ຢາກໄປເຮັດວຽກຢູ່ເມືອງໄທຍ່*

ຂ່າວນີ້ແມ່ນຂ່າວກ່ຽວກັບລະເບີດແຕກແລະມີຄົນໄດ້ຮັບບາດເຈັບ ແຕ່ວ່າກວ່າຈະເຂົ້າເລື່ອງ ກໍ່ມີການສະແດງຄວາມຄິດເຫັນກ່ຽວກັບເມືອງດ້ວຍຫຍໍ້ໜ້າທີ່ຍືດຍາວ.

ຖ້າຈະໃຫ້ດີແທ້ ຄວນຂຽນແບບນີ້:

> *ຕຳຫລວດຄົນໜຶ່ງເສຍຊີວິດ ອີກສິບຄົນໄດ້ຮັບບາດເຈັບຈາກການແກວ່ງລະເບີດໃສ່ບາແຫ່ງໜຶ່ງຢູ່ເມືອງບັດຕຳບອງ ໃນຄືນວັນທີ 31 ກໍລະກົດ.*

ອີກຂ່າວໜຶ່ງທີ່ເຊື່ອງວັກນຳໄວ້ເລິກ ຊຶ່ງເອົາມາຈາກໜັງສືພິມພາສາອັງກິດຂອງມຽນມາ:

ຢ້າງກຸ້ງ - ຕອນເຊົ້າມື້ນີ້ ມີພິທີຮັບບໍລິຈາກເງິນຄັ້ງທີສີ່ ສຳລັບການກໍ່ສ້າງວັດ ຕະພົນ ນາຍູ ຊຶ່ງຈັດຂຶ້ນທີ່ດຳເມຕາຄາ ຊາຕົນເຕະ ຢູ່ອາຄານທີ 5 ໃນເຂດມາຢາງກູນ ໂດຍການເຂົ້າຮ່ວມຂອງທ່ານນາຍພົນກິນ ຍຸນ ເລຂາທິການທີ 1 ຂອງສະພາສັນຕິພາບແລະການພັດທະນາແຫ່ງລັດ ນອກຈາກນີ້ຍັງມີ ດຣ. ຂິ່ນ ວິນ ຊະເວ ພັນລະຍາຂອງທ່ານພົນໂທຂິ່ນ ຍຸ້ນ, ທ່ານ ອູ ອອງ ຕວງ ລັດຖະມົນຕີອຸດສາຫະກຳ ທີ 1 ນາຍພົນຈັດຕະວາ ໂອນ ມິ້ດ ລັດຖະມົນຕີບໍ່ແຮ່, ນາຍພົນຕີ ຈີ ອອງ ລັດຖະມົນຕີຂ່າວສານ, ພັນເອກເຕນ ຍຸ່ນ ລັດຖະມົນຕີຄວາມກ້າວໜ້າຢູ່ເຂດຊາຍແດນ, ຊົນຊາດແລະການພັດທະນາ, ນາຍພົນຕີ ລະມ່ຽນ ຊຸ່ຍ ລັດຖະມົນຕີຂົນສົ່ງ, ນາຍພົນຈັດຕະວາ ປິເອະ ໂຊ່ງ ລັດຖະມົນຕີສະຫວັດດີການສັງຄົມແລະຈັດຕັ້ງຖິ່ນຖານ, ນາຍພົນຕີ ຕິນ ຖຸດ ລັດຖະມົນຕີພະລັງງານໄຟຟ້າ, ນາຍພົນຈັດຕະວາ ເຊນ ວິນ ລັດຖະມົນຕີກິລາ, ນາຍພົນຕີເກດ ເສນ ລັດຖະມົນຕີສາທາ, ນາຍພົນຕີ ເຊນທະວາ ລັດຖະມົນຕີສາດສະໜາ, ເຈົ້າຄອງກຳແພງນະຄອນອູ ໂກ່ ເລ ປະທານຄະນະກຳມະການພັດທະນາເມືອງຢ້າງກຸ້ງ, ບັນດາພະນັກງານສະພາສັນຕິພາບແລະການພັດທະນາແຫ່ງລັດ, ພະນັກງານສະພາສັນຕິພາບແລະການພັດທະນາຂັ້ນຕາແສງແລະເມືອງພ້ອມດ້ວຍຜູ້ມີຈິດໃຈເຫລື້ອມໃສສັດທາຄົນອື່ນໆ.

ນາຍພົນຈັດຕະວາຂິ່ນ ໝ່ອງ ເລຂາຄະນະກຳມະການກໍ່ສ້າງແລະຮອງລັດຖະມົນຕີກະສິກຳແລະຊົນລະປະທານ ໄດ້ສະຫລຸບລາຍງານກ່ຽວກັບ

*ຄວາມຄືບໜ້າຂອງການກໍ່ສ້າງວັດໃຫ້ທ່ານ ນາຍພົນໂທ ກົນ ຍຸນ ເລຂາທີ 1 ແລະປະທານອະນຸກຳມະການດ້ານການເງິນ ລັດຖະມົນຕີຂົນສົ່ງທາງລົດໄຟຕູຣະ ອູ ຕອງ ລຸຍ ລາຍງານໃຫ້ຊາບກ່ຽວກັບເງິນທີ່ໄດ້ຮັບຈາກການບໍລິຈາກແລະການໃຊ້ຈ່າຍໃນການກໍ່ສ້າງວັດ.*

ພາຍຫລັງທີ່ອ່ານຄຳເວົ້າຈຳນວນຫລວງຫລາຍແລະລາຍຊື່ 17 ຄົນພ້ອມດ້ວຍໜ້າທີ່ຕຳແໜ່ງອັນຍືດຍາວແລ້ວເຮົາຈຶ່ງໄດ້ພົບເນື້ອຂ່າວວ່າ:

*ທ່ານນາຍພົນໂທ ກົນ ຍຸນ ເລຂາທີ 1 ແລະບັນດາລັດຖະມົນຕີໄດ້ຮັບເງິນບໍລິຈາກຈຳນວນ 17,5 ລ້ານຈາດ໌.*

ຄວນຈະຂຽນວັກນຳໃຫ້ດີກ່ວານີ້ ຄື:

*ມື້ວານນີ້ ທ່ານ ກົນ ຍຸນ ນາຍພົນສູງສຸດພ້ອມດ້ວຍພະນັກງານຄົນອື່ນໆ ຮັບໂຮມເງິນບໍລິຈາກໄດ້ 17,5 ລ້ານຈາດ໌ ເພື່ອສ້າງວັດໃໝ່ຢູ່ເຂດນາຍາງກູນ.*

ບາງທີ ທ່ານອາດຄິດວ່າຄວນຈະຂຽນລາຍຊື່ພະນັກງານອາວຸໂສທັງໝົດທີ່ມາຮ່ວມພິທີໃສ່ນຳ ຖ້າຈະຂຽນກໍ່ໃຫ້ຂຽນຫລັງຈາກທີ່ລາຍງານຂ່າວແລ້ວ.

## ຢ່າເອົາເນື້ອຫາໃສ່ວັກນຳຫລາຍເກີນໄປ

ສິ່ງສຳຄັນຄືຕ້ອງຮູ້ວ່າ ຄວນຈະເອົາຫຍັງໃສ່ແລະບໍ່ເອົາ



*ເອົາລາຍຊື່ພະນັກງານອາວຸໂສໃສ່ຂ່າວຕາມຫລັງ*

ຫຍັງໃສ່ວັກນຳ. ຢ່າເອົາຫລາຍຄວາມຄິດ, ລາຍລະອຽດທີ່ບໍ່ສຳຄັນປານໃດແລະສາມາດເວົ້າຕາມພາຍຫລັງໄດ້ໃສ່ໃນວັກນຳ. ທ່ານບໍ່ຈຳເປັນຕ້ອງເອົາຄຳຕອບ 5W ແລະ H ມາໃສ່ໄວ້ໃນວັກນຳບາດດຽວ. ບາງຄຳຕອບອາດເອົາໃສ່ຫຍໍ້ໜ້າທີສອງແລະສາມກໍ່ໄດ້.

ໃຫ້ສັງເກດເບິ່ງວັກນຳຈາກໜັງສືພິມໄທສະບັບພາສາອັງກິດ ຊຶ່ງເວົ້າເຖິງການແລກປ່ຽນເງິນຕາ(currency swap) ດັ່ງທີ່ໄດ້ອະທິບາຍຢູ່ກ່ອນໜ້ານີ້ວ່າ ສັນຍາແລກປ່ຽນເງິນຕາໝາຍເຖິງການຕົກລົງກູ້ຢືມເງິນຕາຕ່າງປະເທດ ເພື່ອເຮັດໃຫ້ເງິນຕາຂອງປະເທດຕົນມີຄວາມໝັ້ນຄົງ.

> *ໄທແລະຍີ່ປຸ່ນຈະເຊັນຂໍ້ຕົກລົງເບື້ອງຕົ້ນ ກ່ຽວກັບການແລກປ່ຽນເງິນຕາຂອງສອງປະເທດ ເປັນຈຳນວນ 3 ພັນລ້ານໂດລາອາເມຣິກາ (ຫລືໜຶ່ງແສນສາມໝື່ນຫ້າພັນລ້ານບາດ) ໃນລະຫວ່າງທີ່ລັດຖະມົນຕີການເງິນຂອງສອງປະເທດພົບປະກັນນອກກອງປະຊຸມທະນາຄານພັດທະນາອາຊີ ຢູ່ຮອນໂນລູລູ ໃນອາທິດໜ້າ.*

ການທີ່ລັດຖະມົນຕີສອງປະເທດຈະຕ້ອງເຊັນຂໍ້ຕົກລົງກັນຢູ່ຮອນໂນລູລູ ລະຫວ່າງທີ່ມີກອງປະຊຸມທະນາຄານນັ້ນ ມີຄວາມສຳຄັນບໍ່ ? ຂໍ້ຕົກລົງກັນພຸ້ນທີ່ແມ່ນຂ່າວ, ບໍ່

ແມ່ນບໍ? ແມ່ນຫຍັງຄືຈຸດປະສົງຂອງຂໍ້ຕົກລົງ?

ວັກນຳຂອງສຳນັກຂ່າວເອພີ ຊຶ່ງເວົ້າກ່ຽວກັບເລື່ອງດຽວກັນນີ້ ໄດ້ລາຍງານຂ່າວຢ່າງຊັດເຈນແລະກະທັດຮັດ:

*ໄທແລະຍີ່ປຸ່ນໄດ້ບັນລຸຂໍ້ຕົກລົງກັນ ກ່ຽວກັບການແລກປ່ຽນເງິນຕາຕ່າງປະເທດເປັນຈຳນວນ 3 ພັນລ້ານໂດລາອາເມຣິກາ ເພື່ອຄ້ຳປະກັນຄ່າເງິນບາດ.*

## ຄວາມແຕກຕ່າງຢູ່ບ່ອນນີ້ແມ່ນຫຍັງ ?

ວັກນຳທີ່ດີບໍ່ພຽງແຕ່ໃຫ້ຂໍ້ມູນທໍ່ນັ້ນ ແຕ່ຕ້ອງໃຫ້ຂໍ້ມູນທີ່ໜ້າສົນໃຈນຳອີກ. ວັກນຳບໍ່ຄວນມີແຕ່ຂໍ້ມູນສຳຄັນທີ່ສຸດທໍ່ນັ້ນ ແຕ່ຖ້າເປັນໄປໄດ້ ກໍ່ຄວນບອກຜູ້ອ່ານວ່າ ເຫດການນັ້ນໆແຕກຕ່າງຈາກເຫດການອື່ນແນວໃດ.

ລົດຍົນຕຳກັນທຸກຄັ້ງ ຄືກັນໝົດບໍ? ບໍ່ຄືກັນ.ໃຫ້ຄິດເບິ່ງວ່າ ລົດຕຳກັນທີ່ທ່ານກຳລັງຂຽນຢູ່ ແຕກຕ່າງຈາກລົດຄັນອື່ນໆແນວໃດ ລອງເອົາໃສ່ວັກນຳເບິ່ງ.

ແທນທີ່ຈະຂຽນວ່າ:

*ມື້ວານນີ້ ລົດເມໂດຍສານ ປີ້ນຂວ້ຳຢູ່ນອກນະຄອນຢ້າງກຸ້ງ ໃນລະຫວ່າງທີ່ມີພາຍຸຝົນ ເຮັດໃຫ້ມີຜູ້ເສຍຊີວິດສາມຄົນ.*

ລອງພິຈາລະນາຂຽນແບບນີ້ເບິ່ງ:

*ມື້ວານນີ້ ລົດເມໂດຍສານ ປີ້ນຂວ້ຳຢູ່ນອກນະຄອນຢ້າງກຸ້ງ ໃນລະຫວ່າງທີ່ມີພາຍຸຝົນ ເຮັດໃຫ້ແມ່ຍິງຊະລາສາມຄົນເສຍຊີວິດ ໃນຂະນະທີ່ກຳລັງກັບຄືນມາບ້ານ ຫລັງຈາກໄປຮ່ວມພິທີຊາປານະກິດ*

*ສິບຂອງຍາດພີ່ນ້ອງ.*

> ເຄັດລັບໃນການສ້າງວັກນຳ
> ເວລາສ້າງວັກນຳໃຫ້ຕັ້ງຄຳຖາມກັບຕົວເອງດັ່ງນີ້ :
> - ໃຜເຮັດຫຍັງກັບໃຜ ?
> - ຂ່າວນີ້ກ່ຽວກັບເລື່ອງຫຍັງແທ້ ?
> - ປະເດັນໃນການຂຽນເລື່ອງຄືຫຍັງ ?
> - ແມ່ນຫຍັງຄືສິ່ງທີ່ໜ້າສົນໃຈທີ່ສຸດກ່ຽວກັບເຫດການນີ້ ?
> - ຜູ້ອ່ານຢາກຮູ້ຫຍັງຫລາຍທີ່ສຸດກ່ຽວກັບເຫດການນີ້ ?
> - ແມ່ນຫຍັງຢູ່ໃນເຫດການທີ່ຈະກະທົບຕໍ່ຄວາມຮູ້ສຶກຂອງຜູ້ອ່ານຫລາຍທີ່ສຸດ ?
> - ຖ້າຂຽນຂ່າວກ່ຽວກັບຄຳປາໄສ ໃຫ້ຖາມໂຕທ່ານເອງວ່າ ໃຜເວົ້າຫຍັງໃຫ້ໃຜຟັງ ?
> - ຖ້າຂຽນຂ່າວກ່ຽວກັບກອງປະຊຸມ ໃຫ້ຖາມໂຕທ່ານເອງວ່າມີການປຶກສາມາດຕະການໃດແດ່?

ການຂຽນວັກນຳນັ້ນບໍ່ແມ່ນເລື່ອງງ່າຍຄືກັນກັບການປະຕິບັດຕາມສູດ. ຄຳຖາມວ່າ ໃຜ ບໍ່ຈຳເປັນຕ້ອງຢູ່ກ່ອນໜ້າຄຳຖາມວ່າ ແມ່ນຫຍັງ ສະເໝີໄປແລະບໍ່ຈຳເປັນຕ້ອງຕິດຕາມດ້ວຍຄຳຖາມວ່າ ຢູ່ໃສ ແລະອື່ນໆຕໍ່ໄປ ມັນຂຶ້ນກັບເຫດການຢູ່ໃນຂ່າວ.

ຖ້າຫາກວ່າມີອຸບັດຕິເຫດລົດຍົນແລະມີຜູ້ເສຍຊີວິດສີ່ຄົນອາດຈະຂຽນວັກນຳວ່າ:

*ມື້ວານນີ້ ມີຜູ້ເສຍຊີວິດສີ່ຄົນ ເມື່ອລົດຍົນຄັນໜຶ່ງເສຍຫລັກເຈືອກອອກນອກຖະໜົນ ຢູ່ນະຄອນໂຣ່ຈິມົນ.*

ຖ້າເກີດອຸບັດຕິເຫດລົດຍົນຍ້ອນນ້ຳຖ້ວມ ວັກນຳອາດຈະເນັ້ນໃສ່ຄຳຖາມວ່າ ເປັນຫຍັງຈຶ່ງເກີດເຫດຂຶ້ນ.

*ມື້ວານນີ້ ຝົນຕົກໜັກ ເກີດນ້ຳຖ້ວມພັດລົດຍົນຄັນໜຶ່ງເສຍຫລັກເຈືອກອອກນອກຖະໜົນ ຢູ່ນະຄອນໂຮ່ຈິມິນ ເຮັດໃຫ້ມີຜູ້ເສຍຊີວິດສີ່ຄົນ.*

ຖ້າມີພະນັກງານຂັ້ນນຳຢູ່ໃນລົດຍົນ ວັກນຳອາດເນັ້ນໃສ່ຄຳຖາມວ່າ ໃຜ:

*ມື້ວານນີ້ ທ່ານ ກ. ຮອງລັດຖະມົນຕີການເງິນເສຍຊີວິດຍ້ອນອຸບັດຕິເຫດລົດຍົນຢູ່ນະຄອນໂຮ່ຈິມິນ.*

ຖ້າຫາກຢູ່ບ່ອນທັ້ນມີສິ່ງພິເສດແລະບໍ່ມີຜູ້ໃດຕາຍ ທ່ານອາດເນັ້ນໃສ່ຄຳຖາມວ່າ ຢູ່ໃສ:

*ມື້ວານນີ້ ເກີດອຸບັດຕິເຫດ ລົດຍົນຄັນໜຶ່ງແລ່ນໄປຕຳວັດທີ່ມີຊື່ສຽງຢູ່ນະຄອນໂຮ່ຈິມິນ ຫລັງຈາກທີ່ຄົນຂັບລົດບໍ່ສາມາດຄວບຄຸມລົດໄດ້.*

ທ່ານຕ້ອງຄິດເບິ່ງວ່າ ແງ່ມຸມໃດຂອງເຫດການສຳຄັນທີ່ສຸດ.

## ການເລືອກ "ແງ່ມຸມ" ທີ່ຈະຂຽນ

ບາງເທື່ອ ການເລີ່ມຕົ້ນຂ່າວບໍ່ມີວິທີຖືກຕ້ອງແຕ່ພຽງວິທີດຽວ. ຢູ່ໃນຂ່າວໜຶ່ງອາດມີຫລາຍມຸມມອງຫລືຫລາຍ "ແງ່ມຸມ" ທີ່ໜ້າສົນໃຈກໍ່ເປັນໄດ້.

ສົມມຸດວ່າ ທ່ານກຳລັງເຮັດຂ່າວກ່ຽວກັບກອງປະຊຸມຖະແຫລງຂ່າວ ຊຶ່ງມີລັດຖະມົນຕີການເງິນເຂົ້າຮ່ວມ ຖ້າລັດຖະມົນຕີປະກາດນະໂຍບາຍສຳຄັນ ທ່ານກໍ່ຕ້ອງເອົາ




*ແຕ່ລະເລື່ອງເຫລົ່ານີ້ໃຫ້ແງ່ມຸມທີ່ແຕກຕ່າງກັນ*

ມາເປັນວັກນຳຂອງຂ່າວໄດ້ຢ່າງແນ່ນອນ. ແຕ່ຖ້າຫາກເທື່ອນີ້ ເພິ່ນບໍ່ໄດ້ເວົ້າຫຍັງໃໝ່ເປັນສາລະສຳຄັນພິເສດ ທ່ານອາດຈະເລືອກເອົາແຕ່ບາງປະເດັນທີ່ເພິ່ນເວົ້າຊຶ່ງພໍຈະໃຊ້ໄດ້. ທ່ານອາດເລີ່ມວັກນຳ ດ້ວຍການສະແດງຄວາມຄິດເຫັນໃນແງ່ດີຂອງເພິ່ນ ກ່ຽວກັບການເຕີບໂຕຂອງຍອດຜະລິດຕະພັນແຫ່ງຊາດ (GDP) ໃນປີໜ້າ ຫລືຄວາມຄິດເຫັນຂອງເພິ່ນ ກ່ຽວກັບການຄວບຄຸມພາວະເງິນເຟີ້ ຫລືການພົວພັນດ້ານການຄ້າກັບປະເທດຈີນ. ແງ່ມຸມໃດແງ່ມຸມໜຶ່ງອາດເອົາມາເຮັດເປັນຂ່າວທີ່ດີໄດ້.

ຫລືຖ້າຫາກທ່ານກຳລັງຂຽນກ່ຽວກັບການແຜ່ລະບາດ

ຂອງພະຍາດມາເລເຣຍຢູ່ເຂດຊາຍແດນໄທ - ມຽນມາ ທ່ານກໍ່ສາມາດຂຽນຈາກມຸມມອງຂອງຜູ້ເປັນພະຍາດມາເລເຣຍ ທີ່ກຳລັງໄດ້ຮັບຄວາມທຸກທໍລະມານຍ້ອນພະຍາດນີ້ ຫລືເລື່ອງນັກວິທະຍາສາດທີ່ກຳລັງສຶກສາຄົ້ນຄວ້າກ່ຽວກັບການແຜ່ລະບາດຂອງພະຍາດນີ້ ເພື່ອຜະລິດຢາທີ່ມີປະສິດທິພາບ ໃນການກຳຈັດພະຍາດມາເລເຣຍນີ້.

ຂະນະທີ່ທ່ານພະຍາຍາມຕັດສິນໃຈວ່າ ຈະເອົາແງ່ມຸມໃດມາໃສ່ວັກນຳຂ່າວ ທ່ານຄວນຖາມຕົວເອງວ່າ ແມ່ນໃຜແທ້ທີ່ຈະເປັນຜູ້ອ່ານໜັງສືພິມສະບັບນີ້ຂອງທ່ານ? ແມ່ນຜູ້ອ່ານທົ່ວໄປບໍ່? ແມ່ນຜູ້ອ່ານທີ່ມີການສຶກສາດີບໍ່? ຜູ້ຊ່ຽວຊານບໍ່? ຄົນຕ່າງປະເທດບໍ່? ໃຫ້ເລືອກແງ່ມຸມທີ່ໜ້າສົນໃຈແລະມີຄຸນຄ່າທີ່ສຸດສຳລັບກຸ່ມຜູ້ອ່ານຂອງທ່ານ.

# ບົດທີ 9
# ການວາງໂຄງປະກອບຂອງບົດຂ່າວ

ຫລັງຈາກທີ່ເລືອກວັກນຳໄດ້ແລ້ວ ທ່ານກໍ່ເຮັດໃຫ້ຂ່າວທີ່ເຫລືອເປັນຮູບເປັນຮ່າງຂຶ້ນມາໄດ້. ທ່ານໄດ້ບອກປະເດັນຫລັກຫລືແງ່ມຸມໃຫ້ຜູ້ອ່ານແລ້ວ ບັດນີ້ທ່ານຕ້ອງອະທິບາຍມັນ. ເນື້ອຫາຂອງຂ່າວຕ້ອງຊຸກຍູ້ສິ່ງເສີມວັກນຳ. ສິ່ງເສີມແນວໃດ ? ສິ່ງເສີມດ້ວຍລາຍລະອຽດ, ຄຳເວົ້າທີ່ຍົກມາອ້າງອີງແລະເບື້ອງຫລັງຂອງຂ່າວ.

ແຕ່ວ່າ ທ່ານຈະຈັດລຽງຂ່າວແນວໃດ? ຂ່າວທີ່ດີນັ້ນຈະຕ້ອງສະເໜີຂໍ້ມູນຢ່າງມີເຫດຜົນ. ສິ່ງທີ່ຂຽນໄວ້ໃນຫຍໍ້ໜ້າໜຶ່ງໆຈະເຮັດໃຫ້ຜູ້ອ່ານມີຄຳຖາມຂຶ້ນມາ. ທ່ານຕ້ອງຕອບຄຳຖາມເຫລົ່ານັ້ນຢູ່ໃນຫຍໍ້ໜ້າຕໍ່ໄປ ແລະຄຳຕອບເຫລົ່ານັ້ນຈະແນະນຳວ່າທ່ານຄວນຈະຂຽນຫຍັງຕໍ່ໄປ.

## ການປະສົມປະສານຂໍ້ມູນທີ່ບັນທຶກເຂົ້າກັບຄວາມເຂົ້າໃຈຂອງທ່ານ

ກ່ອນທີ່ຈະເລີ່ມຂຽນ ໃຫ້ຄິດຫົວເລື່ອງຫລືແງ່ມຸມຫລັກຂອງຂ່າວກ່ອນ ແລ້ວຈຶ່ງຄິດຫາປະເດັນຫລັກ ທີ່ທ່ານຢາກຈະອະທິບາຍກ່ຽວກັບຫົວເລື່ອງຫລືແງ່ມຸມນັ້ນ. ໃຫ້ຈັດລຽງອັນດັບຄວາມສຳຄັນ. ຂັ້ນທຳອິດ ພະຍາຍາມບໍ່ເບິ່ງບັນທຶກທີ່ຈົດມາ. ທ່ານອາດຈື່ຈຳປະເດັນສຳຄັນຫລາຍຢ່າງໄດ້ ແລ້ວຈຶ່ງເບິ່ງບັນທຶກແລະເອກະສານ (ຫລືຟັງເທັບບັນທຶກສຽງ) ເພື່ອກວດເບິ່ງວ່າທ່ານລືມຫຍັງແດ່. ໃຫ້ເບິ່ງລາຍລະອຽດແລະຄຳເວົ້າຍົກມາອ້າງອີງທີ່ຈະເອົາມາບັນຈຸເຂົ້າ ເພື່ອອະທິບາຍປະເດັນຫລັກນັ້ນ.

ທ່ານບໍ່ຈຳເປັນຕ້ອງເອົາລາຍລະອຽດທຸກຢ່າງໃສ່. ນັກຂຽນ

ທີ່ດີເລືອກເອົາແຕ່ລາຍລະອຽດທີ່ດີທີ່ສຸດ. ການຮູ້ວ່າຄວນເອົາອັນໃດອອກນັ້ນ ມີຄວາມສຳຄັນເທົ່າກັບຮູ້ວ່າຄວນນຳສິ່ງໃດມາໃສ່ໃນຂ່າວ.

## ບົດຂ່າວສະຖານະການ

ທຸກປະເທດມີເລື່ອງລາວສືບທອດກັນມາວ່າປະເທດຂອງຕົນຖືກກໍ່ຕັ້ງຂຶ້ນແນວໃດ, ກ່ຽວກັບວິລະຊົນຫລືວ່າປະເພນີໃດໜຶ່ງເລີ່ມຕົ້ນເປັນມາແນວໃດ. ເມື່ອເຮົາຂຽນຂ່າວເຫລົ່ານີ້ ເຮົາເລີ່ມຕັ້ງແຕ່ຈຸດເລີ່ມຕົ້ນແລະຈົບລົງດ້ວຍຜົນຫລືເຫດການສຳຄັນທີ່ສຸດ. ນິຍາຍຫລາຍເລື່ອງກໍ່ຂຽນໃນລັກສະນະແບບນີ້.

ແຕ່ບົດຂ່າວສະຖານະການຂຽນກົງກັນຂ້າມກັບແບບທີ່ເວົ້າມາ. ຜູ້ອ່ານໜັງສືພິມຕ້ອງການຮູ້ທັນທີວ່າເກີດຫຍັງຂຶ້ນ. ໂຄງຮ່າງຂອງເລື່ອງຈຶ່ງເອີ້ນວ່າ "ຮູບປີຣາມິດຫົວປັກລົງລຸ່ມ" .





*ມົນລະພິດບໍ່ແມ່ນສາເຫດດຽວທີ່ທຳລາຍສິ່ງແວດລ້ອມ*

ຕອນເທິງຂອງປີຣາມິດນີ້ມີເນື້ອທີ່ກວ້າງ ລຸ່ມລົງມາກໍ່ຈະແຄບແລະສ້ວຍເຂົ້າເລື້ອຍໆຈົນເຖິງປາຍ ໝາຍຄວາມວ່າ ອົງປະກອບທີ່ສຳຄັນທີ່ສຸດຂອງຂ່າວຕ້ອງເອົາຂຶ້ນກ່ອນ ຈາກນັ້ນຈຶ່ງແມ່ນສ່ວນທີ່ສຳຄັນຮອງລົງມາແລະຈົບລົງດ້ວຍອົງປະກອບທີ່ສຳຄັນໜ້ອຍທີ່ສຸດ.

ໂດຍທົ່ວໄປແລ້ວ ວັກນຳຈະຕອບຄຳຖາມພື້ນຖານທີ່ສຳຄັນທີ່ສຸດກ່ຽວກັບເຫດການ ຄືຄຳຖາມ 5W ແລະ H. ຫຍໍ້ໜ້າທີສອງໃຫ້ລາຍລະອຽດຫລືເບື້ອງຫລັງຄວາມເປັນມາກ່ຽວກັບວັກນຳ ຕາມມາດ້ວຍຂໍ້ມູນເພີ່ມເຕີມທີ່ສະໜັບສະໜູນວັກນຳ ເຊັ່ນ: ຄຳເວົ້າອ້າງອີງ, ລາຍລະອຽດແລະຄວາມເປັນມາ. ຫລັງຈາກທີ່ຂຽນຂໍ້ມູນໝົດທຸກຢ່າງກ່ຽວກັບຫົວເລື່ອງຫລັກແລ້ວ ທ່ານກໍ່ຂຽນກ່ຽວກັບຫົວເລື່ອງທີ່ມີຄວາມສຳຄັນນ້ອຍກວ່າ. ຄຳເວົ້າອ້າງອີງທີ່ດີຈະດຶງດູດຜູ້ອ່ານ, ສະນັ້ນ ໃຫ້ເອົາມາໃສ່ໄລຍະທຳອິດຂອງບົດຂ່າວ.

ເປັນຫຍັງນັກຂ່າວຈຶ່ງຂຽນຂ່າວແບບປີຣາມິດຫົວປັກລົງ?

ຜູ້ອ່ານບໍ່ມີເວລາອ່ານຈົບທຸກຂ່າວ ຜູ້ອ່ານມັກຈະອ່ານແຕ່ພຽງບາງຫຍໍ້ໜ້າທຳອິດ ສະນັ້ນ ທ່ານຕ້ອງໃຫ້ຜູ້ອ່ານໄດ້ຮັບຂໍ້ມູນທີ່ສຳຄັນທີ່ສຸດທັນທີໂລດ. ຖ້າຫາກວ່າຜູ້ອ່ານຕ້ອງການຮູ້ລາຍລະອຽດຫລາຍຂຶ້ນ ຫລືມີເວລາເຂົາເຈົ້າກໍຈະອ່ານຕໍ່ໄປ.

ໜັງສືພິມຫລາຍສະບັບບໍ່ມີເນື້ອທີ່ຫລາຍ ບັນນາທິການຈຶ່ງຕ້ອງຕັດເນື້ອຂ່າວອອກໃຫ້ພໍດີກັບໜ້າ. ວິທີງ່າຍທີ່ສຸດໃນການຕັດຂ່າວ ຄືຕັດຫຍໍ້ໜ້າສຸດທ້າຍອອກ, ສະນັ້ນ ໃຫ້ເອົາຂໍ້ມູນ

ທີ່ມີຄວາມສຳຄັນໜ້ອຍທີ່ສຸດໄວ້ຕອນທ້າຍຂອງບົດຂ່າວ.

ພວກເຮົາລອງມາເບິ່ງຂ່າວສະຖານະການທີ່ດີສອງສາມຂ່າວ.

ຂ່າວນີ້ ພວກເຮົາເຄີຍເຫັນມາແລ້ວຢູ່ໃນບົດທີ 3 ຊຶ່ງບອກຂໍ້ມູນກະທັດຮັດ ແລະເກາະກ່າຍກັບຫົວເລື່ອງ ໂດຍບໍ່ມີຄຳເວົ້າຫລືລາຍລະອຽດທີ່ເກີນຄວາມຈຳເປັນ.

## *ກຳມະກອນໂຮງງານຕັດຫຍິບກຳປູເຈຍປະສົບບັນຫາຫຍຸ້ງຍາກ*

*ພະນົມເປັນ, ກຳປູເຈຍ (ສຳນັກຂ່າວເອພີ) ມື້ວານນີ້ ທ່ານ ຈາມ ປຣະສິດ ລັດຖະມົນຕີການຄ້າກ່າວວ່າ ການເຕີບໂຕຊ້າທາງດ້ານເສດຖະກິດຢູ່ໃນສະຫະລັດອາເມຣິກາ ເຮັດໃຫ້ໂຮງງານຕັດຫຍິບຢູ່ໃນກຳປູເຈຍຢ່າງນ້ອຍ 12 ແຫ່ງຕ້ອງປິດກິດຈະການຊົ່ວຄາວໃນປີນີ້.*

*ຂໍ້ຄວາມທີ່ບອກວ່າເກີດຫຍັງຂຶ້ນນັ້ນງ່າຍດາຍແລະຊັດເຈນ. ວັກນຳໃຫ້ຂໍ້ມູນສຳຄັນທີ່ສຸດຄື: ການປິດໂຮງງານ 12 ແຫ່ງ ໂດຍອ້າງແຫລ່ງຂ່າວຊຶ່ງແມ່ນລັດຖະມົນຕີ ເພາະວ່ານັກຂ່າວບໍ່ຮູ້ລາຍລະອຽດດ້ວຍຕົນເອງ.*

*ລັດຖະມົນຕີການຄ້າເວົ້າວ່າ ມີກຳມະກອນ 3,000 ຄົນຖືກປົດອອກຈາກວຽກຊົ່ວຄາວ ແລະຖ້າຫາກວ່າສະພາບການຍັງບໍ່ດີຂຶ້ນ ກຳມະກອນອີກຈຳນວນຫລວງຫລາຍກໍ່ຈະບໍ່ມີວຽກເຮັດງານທຳ.*

*ລັດຖະມົນຕີການຄ້າຍັງເວົ້າອີກວ່າ ນອກຈາກນີ້ແລ້ວ ຊົ່ວໂມງເຮັດວຽກຂອງກຳມະກອນອີກຫລາຍພັນຄົນຈະຖືກຕັດລົງ ເນື່ອງຈາກວ່າໂຮງງານຕັດຫຍິບ 200 ແຫ່ງໄດ້ຕັດຊົ່ວໂມງເຮັດວຽກລ່ວງເວລາລົງ ແລະປ່ຽນການເຮັດວຽກສອງຕອນມາເປັນຕອນດຽວ.*

*ຄຳຕອບຂອງຄຳຖາມທີ່ວ່າ "ເປັນຫຍັງຂ້ອຍຈຶ່ງອ່ານຂ່າວນີ້" ກໍ່ຄືວ່າ ເຫດການນີ້ມີຜົນກະທົບຕໍ່ປະຊາຊົນ ສະນັ້ນປະຊາຊົນຕ້ອງສົນໃຈຂ່າວນີ້.*

*ລັດຖະມົນຕີການຄ້າເວົ້າວ່າ: "ບັນຫາເສດຖະ*

*ຄຳເວົ້າທີ່ເອົາມາອ້າງອີງຊ່ວຍສະໜັບສະໜູນຫຍໍ້ໜ້າທຳອິດ ໂດຍຍົກຄຳເວົ້າແທ້ໆຂອງລັດຖະມົນຕີມາໃສ່ ຊຶ່ງກ່າວເຖິງໂຮງງານແລະເສດຖະກິດຂອງສະຫະລັດອາເມຣິກາ*

*ກິດຢູ່ໃນສະຫະລັດອາເມຣິກາສ້າງຄວາມວິຕົກກັງວົນໃຈໃຫ້ແກ່ຜູ້ບໍລິຫານໂຮງງານແລະກຳມະກອນ.*

*ອຸດສາຫະກຳຕັດຫຍິບຂອງກຳປູເຈຍຈ້າງກຳມະກອນ 200.000 ຄົນເຂົ້າເຮັດວຽກ. ສະເລ່ຍແລ້ວຜູ້ໜຶ່ງມີລາຍໄດ້ 40 ໂດລາອາເມຣິກາຕໍ່ເດືອນ. ຜົນຜະລິດຫລາຍກວ່າ 80 ເປີເຊັນຖືກສົ່ງໄປຂາຍຍ່ອຍຢູ່ສະຫະລັດອາເມຣິກາ.*

*ເບື້ອງຫລັງຄວາມເປັນມາແລະເນື້ອຫາສາລະແມ່ນເວົ້າເຖິງອຸດສາຫະກຳຕັດຫຍິບຂອງກຳປູເຈຍວ່າ ມີການກ່ຽວໂຍງກັບເສດຖະກິດສະຫະລັດອາເມຣິກາແນວໃດ*

*ລັດຖະມົນຕີກະຊວງການຄ້າເວົ້າຕື່ມວ່າ ທັ້ງໆທີ່ເວລາຜ່ານພົ້ນໄປໄດ້ເຄິ່ງປີແລ້ວ ແຕ່ກຳປູເຈຍຫາກໍ່ສົ່ງເສື້ອຜ້າໄປສະຫະລັດອາເມຣິກາຕ່ຳກວ່າ 40 ເປີເຊັນຂອງໂຄຕ້າສົ່ງອອກປີນີ້. ທ່ານກ່າວໂດຍສົມທຽບໃສ່ປີຜ່ານມາ ພຽງແຕ່ທ້າຍເດືອນມິຖຸນາທໍ່ນັ້ນກຳປູເຈຍກໍ່ສາມາດສົ່ງເສື້ອຜ້າໄປສະຫະລັດອາເມຣິກາໄດ້ເກືອບເຕັມໂຄຕ້າແລ້ວ.*

ຕໍ່ໄປແມ່ນຂ່າວຈາກໜັງສືພິມ *ເດີະ ແຄມໂບເດຍ ເດລີ (The Cambodia Daily)* ຂຽນໂດຍ ໄກ ເກີມ ຊອງ ນັກຮຽນເກົ່າມູນນິທິອະນຸສອນສື່ອິນດູຈີນ ("ໂມໂຫ" ໝາຍຄວາມວ່າ ອາລົມບໍ່ດີ)

## *ຄົນຂັບລົດຕັກຊີໂມໂຫພາກັນປິດຖະໜົນເລກ 6 ອາ*

*ຄືກັນກັບເລື່ອງຢູ່ຂ້າງເທິງນັ້ນ ວັກນຳໄດ້ພັນລະນາແບບງ່າຍໆແລະຊັດເຈນກ່ຽວກັບເລື່ອງທີ່ເກີດຂຶ້ນຕາມອັນດັບແລ້ວບອກຜົນຄື: ລົດຕິດ*

*ຄົນຂັບລົດຕັກຊີ 20 ຄົນອາລົມບໍ່ດີເນື່ອງຈາກກົດລະບຽບໃໝ່ຂອງເມືອງຫ້າມພວກເຂົາເຈົ້າເຂົ້າໄປໃນພະນົມເປັນ ຈຶ່ງພາກັນປິດຖະໜົນເລກ 6 ອາໃນວັນອັງຄານນີ້ ເຮັດໃຫ້ລົດຕິດກັນເປັນເວລາໜຶ່ງຊົ່ວໂມງ.*

ລົດດັບເພີງຫົກຄັນຖືກເອີ້ນໃຫ້ມາບ່ອນທີ່ເກີດເຫດ ເພື່ອຂັບໄລ່ຄົນຂັບລົດຕັກຊີ ທີ່ກຳລັງໂຕ້ຖຽງຕຳຫລວດ ແລະເຈົ້າໜ້າທີ່ ຊຶ່ງພະຍາຍາມຫ້າມບໍ່ໃຫ້ພວກເຂົາເຈົ້າຂັບລົດຕັກຊີເຂົ້າໄປໃນເມືອງ.

ວັນອັງຄານແມ່ນມື້ທຳອິດທີ່ເທດສະບານຫ້າມລົດຕັກຊີຈາກແຂວງພາກເໜືອເຂົ້າມາໃນເມືອງ.

ເຈົ້າໜ້າທີ່ເວົ້າວ່າ ການເກືອດຫ້າມນີ້ແມ່ນເພື່ອຫລຸດຜ່ອນຄວາມຫຍຸ້ງຍາກສັບສົນດ້ານຈາລະຈອນແລະເພື່ອຄວາມສວຍງາມຂອງບ້ານເມືອງ.

ປັດຈຸບັນ ລົດຕັກຊີຖືກກຳນົດໃຫ້ຈອດຢູ່ຕະຫລາດເປຣັກລຽບ ຊຶ່ງຕັ້ງຢູ່ປະມານ 5 ກິໂລແມັດຢູ່ນອກເມືອງ ແລ້ວປ່ຽນໃຫ້ຜູ້ໂດຍສານຂຶ້ນລົດເມເຂົ້າມາໃນພະນົມເປັນ.

*ລາຍລະອຽດອະທິບາຍວັກນຳ ກໍ່ຂຽນແບບງ່າຍໆແລະ ຊັດເຈນຄືກັນກັບບົດຂ່າວຂ້າງເທິງ*

*ເບື້ອງຫລັງ: ຢູ່ໃນບົດຂ່າວຂ້າງເທິງນັ້ນມີການເອົາຂໍ້ມູນເບື້ອງຫລັງອັດທ້າຍ,ແຕ່ຢູ່ບົດນີ້ມີການເອົາຂໍ້ມູນເລື່ອງຫລັງຫຍັບຂຶ້ນສູງໜ້ອຍໜຶ່ງ ເພາະວ່າຜູ້ອ່ານອາດຈະບໍ່ເຂົ້າໃຈ ຖ້າບໍ່ບອກວ່າຄວາມຂັດແຍ່ງນັ້ນແມ່ນມີສາເຫດມາຈາກໃສ*

ຄົນຂັບລົດຕັກຊີເວົ້າວ່າ ບໍ່ຍຸດຕິທຳເລີຍທີ່ໃຫ້ບໍລິສັດໂຫ ຫວາ ເກັນຕິງ ທຼານສ໌ປອຣຕ໌ ຈຳກັດຂອງມາເລເຊຍໄດ້ໃບອະນຸຍາດຂົນສົ່ງຈາກພະນົມເປັນໄປຫາເມືອງເປຣັກລຽບ ແລະຈາກເປຣັກລຽບໄປຫາແຂວງຕ່າງໆ.

ຄົນຂັບລົດຕັກຊີຊຶ່ງຂັບລົດຮັບສົ່ງຄົນໄປມາຢູ່ແຂວງກຳປົງຈາມເວົ້າວ່າ: “ຖ້າຫາກ ບໍລິສັດໂຫ ຫວາໄດ້ຮັບອະນຸຍາດໃຫ້ເຮັດແນວນີ້ໄດ້ ພວກເຮົາຄົນຂັບລົດຕັກຊີກໍ່ຈະຫາເງິນບໍ່ໄດ້ ເພາະວ່າປະຊາຊົນຈະຕ້ອງລົງລົດເມມາຕໍ່ລົດອີກຄັນໜຶ່ງຕື່ມ.”

*ຂ່າວຈາກຝ່າຍຄົນຂັບລົດຕັກຊີ ກັບຄຳເວົ້າອ້າງອີງຈາກຄົນຂັບລົດຕັກຊີຄົນໜຶ່ງ*

ທ່ານ ຊົນ ເພຍຣົມ ຜູ້ຊ່ວຍຜູ້ຈັດການບໍລິສັດໂຫ ຫວາເວົ້າວ່າ ຄົນຂັບລົດຕັກຊີບໍ່ຄວນເຂົ້າມາແຊກແຊງທຸລະກິດຂອງໂຫ ຫວາ ເພາະວ່າບໍລິສັດໄດ້ຮັບອະນຸຍາດ

*ຂ່າວຈາກຝ່າຍບໍລິສັດລົດເມກັບຄຳເວົ້າອ້າງອີງຈາກຜູ້ຕາງໜ້າບໍລິສັດ*

*ຈາກກະຊວງໂຍທາແລະເທດສະບານ ໃຫ້ດຳເນີນກິດຈະການລົດເມໄດ້.*

*ທ່ານກ່າວວ່າ ບໍລິສັດຂອງທ່ານພະຍາຍາມຊ່ວຍເຫລືອຄົນຂັບລົດຕັກຊີໃນທ້ອງຖິ່ນຢູ່ແລ້ວ ດ້ວຍການຫລຸດຖ້ຽວລົດເມຈາກເປຣັກລຽບໄປຫາແຂວງຕ່າງໆ ຈາກ 12 ຖ້ຽວຕໍ່ມື້ ມາເປັນ 7 ຖ້ຽວຕໍ່ມື້.*

*ທ່ານ ຊິນ ເພຍຣິມເວົ້າວ່າ: "ຖ້າພວກເຮົາລົງທຶນຢູ່ບ່ອນນີ້ບໍ່ໄດ້ ພວກເຮົາກໍ່ຈະໄປ ແລະບອກໝູ່ເພື່ອນວ່າບໍ່ຕ້ອງມາບ່ອນນີ້."*

*ທັດສະນະຂອງອີກຝ່າຍໜຶ່ງທີ່ກ່ຽວຂ້ອງກັບຂ່າວໂດຍປະກອບຄຳເວົ້າອ້າງອີງນຳອີກ. ການໃຊ້ຄຳເວົ້າອ້າງອີງສາມຊຸດເຮັດໃຫ້ເລື່ອງມີຊີວິດຊີວາ ທັງໃຫ້ທັດສະນະແລະອາລົມທີ່ບັນຈຸຢູ່ໃນຄວາມຂັດແຍ່ງດັ່ງກ່າວ.*

*ທ່ານ ທະເຍມ ຊາຣອນ ຜູ້ອຳນວຍການກົມໂຍທາເທດສະບານເວົ້າວ່າ ຄົນຂັບລົດຕັກຊີຄວນເອົາໃຈໃສ່ປັບປຸງຄຸນນະພາບດ້ານການບໍລິການຂອງຕົນ ແທນທີ່ຈະກ່າວໃສ່ຮ້າຍປ້າຍສີໂທ ທວາ.*

*ທ່ານ ເວົ້າວ່າ: "ຂ້າພະເຈົ້າຄິດວ່າ ປະຊາຊົນເລືອກລົດເມຂອງໂທ ທວາ ເພາະວ່າປອດໄພດີ ທັງມີເຄື່ອງປັບອາກາດແລະສະດວກສະບາຍ."*

## ການຈັດການກັບການມີຫລາຍຫົວເລື່ອງ

ຂ່າວຫລາຍຂ່າວມີຫົວເລື່ອງແຕ່ພຽງອັນດຽວ ແຕ່ບາງເທື່ອຂ່າວໜຶ່ງອາດມີສອງປະເດັນຫລືຫລາຍກວ່ານັ້ນຊຶ່ງມີຄວາມສຳຄັນເທົ່າທຽມກັນ.

ສົມມຸດວ່າ ສະພານິຕິບັນຍັດຜ່ານກົດໝາຍສອງສະບັບ: ສະບັບໜຶ່ງເພີ່ມພາສີລາຍໄດ້; ອີກສະບັບໜຶ່ງຫ້າມການໃຊ້ແຮງງານເດັກ. ທັງສອງເລື່ອງມີຄວາມສຳຄັນພໍໆກັນ. ຖ້າທ່ານເອົາສ່ວນປະກອບທັງສອງມາໃສ່ໃນວັກນຳດຽວກັນ ເຄິ່ງໜຶ່ງອາດເນັ້ນເລື່ອງພາສີ ສ່ວນອີກເຄິ່ງໜຶ່ງເນັ້ນໃສ່ການຈຳກັດອາ

ຍຸການໃຊ້ແຮງງານເດັກ.

ຕົວຢ່າງ:

*ມື້ນີ້ ສະພາຜູ້ແທນປະຊາຊົນຜ່ານກົດໝາຍເພີ່ມພາສີລາຍໄດ້ແລະຫ້າມການໃຊ້ແຮງງານເດັກ.*

ຢູ່ໃນບົດຂ່າວນີ້ ທ່ານຕ້ອງເອົາເນື້ອຫາທັງສອງຢ່າງມາຢູ່ນຳກັນ ໂດຍສະເໜີລາຍລະອຽດກ່ຽວກັບພາສີກ່ອນ ຕາມດ້ວຍລາຍລະອຽດກ່ຽວກັບກົດໝາຍແຮງງານເດັກ. ຖ້າຫາກວ່າຂ່າວຂອງທ່ານກະໂດດໄປກະໂດດມາລະຫວ່າງສອງເລື່ອງ ຜູ້ອ່ານກໍ່ຈະສັບສົນ.

## ບົດຂ່າວລັກສະນະສາລະຄະດີ

ຂ່າວສະຖານະການສ່ວນຫລາຍແມ່ນຂຽນແບບຮູບປີຣາມິດທີ່ວປັກລົງລຸ່ມ ແຕ່ມີອີກຫລາຍວິທີໃນການຮຽບຮຽງຂ່າວລັກສະນະສາລະຄະດີ. ແຜນວາດຢູ່ລຸ່ມສະແດງໃຫ້ເຫັນວິທີທີ່ໃຊ້ກັນທົ່ວໄປວິທີໜຶ່ງ.




ໂດຍທົ່ວໄປແລ້ວ ຂ່າວລັກສະນະສາລະຄະດີຈະໃຊ້ວັກນຳແບບອ້ອມຄ້ອມ. ນັກຂຽນມັກເລີ່ມຕົ້ນດ້ວຍການເນັ້ນໃສ່ບຸກຄົນໃດບຸກຄົນໜຶ່ງ ຊຶ່ງປະເຊີນບັນຫາໃດໜຶ່ງຄືກັນກັບຄົນອື່ນໆ. ເຮັດແນວນີ້ກໍ່ເພາະວ່າຜູ້ອ່ານສາມາດເຂົ້າໃຈສະຖາ

ນະການແລະປະສົບການສະເພາະໃດໜຶ່ງໄດ້ດີກວ່າສະຖານະການລວມໆ. ໝາຍຄວາມວ່າເອົາບຸກຄົນໃດໜຶ່ງຍົກມາເປັນຕົວຢ່າງ ເພື່ອສະແດງໃຫ້ເຫັນສະຖານະການລວມ. ອີກວິທີໜຶ່ງທີ່ມັກໃຊ້ກັນຫລາຍໃນການເລີ່ມຕົ້ນ ຄືການສ້າງສາກຂອງເລື່ອງຂຶ້ນມາ ໂດຍອາດຈະພັນລະນາກ່ຽວກັບສະຖານທີ່ຢ່າງມີສີສັນ.

ຫລັງຈາກວັກນຳແບບອ້ອມຄ້ອມກໍ່ແມ່ນຫຍໍ້ໜ້າ ທີ່ບອກຫົວເລື່ອງຫລັກແກ່ຜູ້ອ່ານວ່າຂ່າວນີ້ກ່ຽວກັບຫຍັງ. ຫຍໍ້ໜ້ານີ້ຈະເຊື່ອມຕົວຢ່າງ, ພາບຫລືສາກເຂົ້າກັບຫົວເລື່ອງ ຊຶ່ງມັກຈະກຳນົດໄວ້ບໍ່ໃຫ້ກາຍຫຍໍ້ໜ້າທີສີກຫລືທີເຈັດ.




*ການດູມໍເປັນຂ່າວລັກສະນະສາລະຄະດີທີ່ດີໄດ້*

ສ່ວນທີ່ເຫລືອຈະອະທິບາຍວັກນຳແລະສະໜັບສະໜູນວັກນຳດ້ວຍລາຍລະອຽດ, ຄຳເວົ້າແລະຕົວຢ່າງ. ຫລັງຈາກຂຽນຫຍໍ້ໜ້າທີ່ສະເໜີຫົວເລື່ອງແລ້ວ ນັກຂຽນມັກຈະເພີ່ມລາຍລະອຽດກ່ຽວກັບບຸກຄົນ, ພາບຫລືສາກຢູ່ໃນຕອນຕົ້ນຂອງເລື່ອງ. ຂ່າວລັກສະນະສາລະຄະດີມັກຈະປະກອບດ້ວຍການພັນລະນາທີ່ດີ, ຄຳເວົ້າອ້າງອີງທີ່ມີ “ສີສັນ” ແລະມັກລົງທ້າຍດ້ວຍການສ້າງຄວາມປະທັບໃຈຢ່າງຍິ່ງໃຫ້ແກ່ຜູ້ອ່ານກ່ຽວກັບຫົວເລື່ອງຫລັກ.

ສະນັ້ນ ຂ່າວລັກສະນະສາລະຄະດີຈະມີການວາງໂຄງເລື່ອງຢ່າງຮອບຄອບ ຕັ້ງແຕ່ຕອນຕົ້ນ, ຕອນກາງແລະຕອນຈົບ ຄືກັນກັບເລື່ອງສັ້ນແລະນິຍາຍດີໆ. ທ່ານຈະຕັດສ່ວນປາຍ

ຖິ້ມຄືກັນກັບຂ່າວສະຖານະການບໍ່ໄດ້.

ຕໍ່ໄປແມ່ນຂ່າວລັກສະນະສາລະຄະດີທີ່ເຕັມໄປດ້ວຍສີສັນ, ຄຳເວົ້າອ້າງອີງທີ່ດີ, ລາຍລະອຽດທີ່ມີຄວາມໝາຍແລະຄຳອະທິບາຍຄວາມສຳຄັນຂອງເລື່ອງທີ່ເກີດຂຶ້ນ. ນັກຂຽນຮວບຮວມຂໍ້ສັງເກດສ່ວນຕົວ, ເອກະສານຄົ້ນຄວ້າແລະການສຳພາດເຂົ້ານຳກັນ. ພວກເຮົາເຫັນວັກນຳຂອງຂ່າວໃນບົດທີ່ຜ່ານມາແລ້ວ ໂດຍເອົາມາເປັນຕົວຢ່າງໃນການສັງເກດແລະວິທີການສ້າງສາກ.

***ການພັດທະນາຢ່າງໄວວາກຳລັງຈະເຮັດໃຫ້ເມືອງບູຮານກາຍເປັນ "ກຸງເທບແຫ່ງທີສອງ"***

***ຊຽງໃໝ່, ປະເທດໄທ*** *- ເມື່ອບໍ່ດົນມານີ້ ປະຊາຊົນໄດ້ມາເຕົ້າໂຮມກັນຢູ່ປະຕູເມືອງຊຽງໃໝ່ທັງຫ້າແຫ່ງເພື່ອຮ່ວມພິທີທຳບຸນບູຮານ ຊຶ່ງເອີ້ນວ່າ ອິນທະຂິນ. ພະສົງຄຸມຜ້າເຫລືອງສູດມົນ ສ່ວນປະຊາຊົນກໍ່ເອົາທູບທຽນມາບູຊາໄຫວ້ວອນຂໍຝົນ ແລະຂໍໃຫ້ພືດຜົນອຸດົມສົມບູນ.*

*ແຕ່ວ່າ ສຽງແກແລະສຽງລົດແອອັດກັນຢູ່ອ້ອມແອ້ມປະຕູເມືອງໄດ້ລົບກວນສຽງສູດມົນ ສ່ວນຄວັນລົດຍົນແລະລົດຈັກກໍ່ຂືວກຸ້ມກືນເອົາກິ່ນຫອມຂອງທູບທຽນໄປຈົນໝົດ.*

*ໂດຍການພັນລະນາທີ່ມີການນຳໃຊ້ປະສາດສຳຜັດທັງໝົດ, ຜູ້ຂຽນສາມາດຊັກດຶງຜູ້ອ່ານເຂົ້າໄປຫາສາກຂອງເລື່ອງ. ນັກຂຽນໄດ້ພາຜູ້ອ່ານເຂົ້າສູ່ເລື່ອງແລະສະແດງໃຫ້ເຫັນຫົວເລື່ອງຫລັກເລີຍ.*

*ຊຽງໃໝ່ ເມືອງຫລວງເກົ່າຂອງອານາຈັກລ້ານນາຂອງໄທສະຫລອງວັນຄົບຮອບ 702 ປີ ໃນປີນີ້. ຊຽງໃໝ່ເປັນເມືອງທີ່ນັກທ່ອງທ່ຽວນິຍົມມາທ່ຽວຫລາຍທີ່ສຸດເປັນອັນດັບສອງຖັດຈາກກຸງເທບຊຶ່ງມີອາຍຸຕ່ຳກວ່າຫ້າຮ້ອຍປີ. ຊຽງໃໝ່ຍັງມີມົນສະເໜ່ຂອງໂລກສະໄໝບູຮານຢູ່ຫລາຍຢ່າງ: ວັດວາອາຣາມ, ເຄື່ອງຫັດຖະກຳ, ບ້ານ*

*ຂອງຊົນເຜົ່າທີ່ຢູ່ໃກ້, ມີປ່າເຂົາລໍາເນົາໄພແລະນໍ້າຕົກ. ສິ່ງທີ່ໄດ້ຮັບການອະນຸລັກໄວ້ເປັນຢ່າງດີ ຄືຄັນຄູອ້ອມເມືອງແລະບາງສ່ວນຂອງປະຕູເມືອງພ້ອມດ້ວຍປ້ອມຮົບ ທີ່ສະແດງເຂດເມືອງດັ້ງເດີມໄວ້. ເມືອງຊຽງໃໝ່ອ້ອມຮອບດ້ວຍພູເຂົາທີ່ອຸດົມສົມບູນ, ປ່າດົງພົງໄພແລະສາຍນໍ້າປິງ ຈົນຖືກຂະໜານນາມວ່າກຸຫລາບເມືອງເໜືອ.*

*ແຕ່ນັກອະນຸລັກພາກັນເອີ້ນເມືອງຊຽງໃໝ່ວ່າ :"ກຸງເທບແຫ່ງທີສອງ" ເພາະວ່າການຂະຫຍາຍຕົວຢ່າງໄວວາເຮັດໃຫ້ການຈາລະຈອນຕິດຂັດ, ເກີດມົນລະພິດ, ມີເຮືອນຄອນໂດສູງໃຫຍ່ແລະສູນການຄ້າຂະໜາດຍັກຊຶ່ງຄຸກຄາມປະເພນີອັນດີງາມຂອງພາກເໜືອ. ຮູບແຕ້ມຢູ່ຫໍພິພິດຕະພັນສິລະປະສະໄໝໃໝ່ທີ່ຫາກໍ່ເປີດ ຊຶ່ງມີຊື່ວ່າ: "ຊຽງໃໝ່ 1997" ສະແດງໃຫ້ເຫັນຄວັນຈາກທໍ່ອາຍເສຍຂອງລົດຍົນແລະອາຄານສູງໃຫຍ່ຂົ່ມຂູ່ຮູບຊ້າງທີ່ມີນໍ້າຕາເຕັມເບົ້າ.*

*ຫຍໍ້ໜ້າຕ່າງໆເຫລົ່ານີ້ສືບຕໍ່ພັນລະນາຢ່າງມີສີສັນຢູ່ໃນຄໍານໍາແລະອະທິບາຍຫົວເລື່ອງຂອງຂ່າວ. ໃຫ້ສັງເກດເບິ່ງຄວາມແຕກຕ່າງກັນລະຫວ່າງອະດີດແລະປັດຈຸບັນທີ່ສະເພາະເຈາະຈົງ ຊີ້ໃຫ້ເຫັນຫົວເລື່ອງໄດ້ດີ*

*ສາເຫດຂອງການເຕີບໂຕຢ່າງໄວວາຂອງເມືອງຊຽງໃໝ່ສ່ວນໜຶ່ງມາຈາກທຸລະກິດດ້ານກະສິກໍາຂອງຍີ່ປຸ່ນແລະໂຮງງານຢູ່ດ້ານໃຕ້ຂອງເມືອງ. ແຕ່ອີກສ່ວນໜຶ່ງກໍ່ມາຈາກການຜ່າຍໜີຄວາມວຸ້ນວາຍຂອງຄົນຮັ່ງມີຢູ່ກຸງເທບ. ຊານເມືອງຊຽງໃໝ່ທີ່ເຄີຍເປັນທົ່ງນານັ້ນ ມາບັດນີ້ ໄດ້ກາຍເປັນດິນປຸກສ້າງ ບ້ານຈັດສັນຂະໜາດໃຫຍ່ຄືກັນກັບກຸງເທບ ແລະມີຫລາຍບ່ອນທີ່ຍັງບໍ່ທັນມີຄົນອາໄສຢູ່ ເພາະວ່າຄົນບໍ່ມີເງິນຊື້.*

*ການຫລຸດຖອຍທາງດ້ານເສດຖະກິດຂອງໄທໃນປັດຈຸບັນເຮັດໃຫ້ໂຄງການປຸກສ້າງໃຫຍ່ໆຢຸດສະງັກລົງ ແຕ່ບໍ່ຕ້ອງສົງໄສວ່າຊຽງໃໝ່ຈະກ້າວເດີນໄປໃນທິດທາງໃດຖ້າຫາກເງິນໄຫລກັບຄືນມາ.*

*ຫຍໍ້ໜ້າທັງສອງນີ້ສືບຕໍ່ອະທິບາຍຫົວເລື່ອງຂອງບົດຂ່າວຢ່າງມີສີສັນ. ຈົ່ງສັງເກດວິທີການສົມທຽບທີ່ສະເພາະເຈາະຈົງລະຫວ່າງອະດີດແລະປັດຈຸບັນເພື່ອອະທິບາຍຫົວເລື່ອງ.*

*ນັກຂຽນໃຫ້ຕົວຢ່າງບັນຫາຂອງເມືອງຫລາຍຂຶ້ນ ຄ້າຍຄືກັນກັບຕົວຢ່າງຢູ່ໃນຫຍໍ້ໜ້າທຳອິດ. ຈົ່ງສັງເກດເບິ່ງການປຽບທຽບ(ບ່ອນຈອດລົດມີຂະໜາດເທົ່າກັບສະໜາມເຕະບານ)ແລະລາຍລະອຽດສະເພາະເຈາະຈົງ(ນັບຕັ້ງແຕ່ຖົ່ວລຽນຈີນຮອດຕຸກກະຕາບາຣ໌ບີ້)ເຮັດໃຫ້ຜູ້ອ່ານເຫັນພາບໄດ້ຊັດເຈນ*

*"ຮ້ານຊຸບພະສິນຄ້າຂະໜາດຍັກ" ແຫ່ງທຳອິດຢູ່ເມືອງຊຽງໃໝ່ໄດ້ເປີດກິດຈະການສາມປີຜ່ານມາແລ້ວ ແຕ່ບໍ່ພໍທີ່ໃດກໍ່ມີສາມບ່ອນເປີດອີກໃໝ່ ໃນເດືອນທັນວາແລ້ວນີ້ ມີອາຄານທີ່ມີໂຄງສ້າງຄືກັບໂກດັງໃຫຍ່ ພ້ອມທັງມີບ່ອນຈອດລົດເທົ່າກັບສະໜາມເຕະບານ ແລະຂາຍທຸກສິ່ງທຸກຢ່າງ ນັບຕັ້ງແຕ່ໝາກຖົ່ວລຽນຈີນຮອດຕຸກກະຕາບາຣ໌ບີ້ແລະຈັກຊັກເຄື່ອງ. ການໃຊ້ຈ່າຍສະດວກສະບາຍຢູ່ຈຸດດຽວໂດຍຫາຊື້ສິນຄ້າລາຄາຖືກ ກຳລັງຄຸກຄາມຄວາມຢູ່ລອດຂອງຮ້ານນ້ອຍໆໃນລະດັບຄອບຄົວແລະຕະຫລາດສົດຂອງຊຸມຊົນ ຊຶ່ງຜູ້ຄົນມັກພາກັນໄປຊື້ສິນຄ້າ.*

*ຮ້ານຄ້າຂະໜາດຍັກຊຶ່ງແມ່ນເຄືອຂ່າຍຂອງບໍລິສັດກາເຣີຟວກແລະໂອຊອງຂອງຝຣັ່ງກໍ່ເປີດກິດຈະການຂຶ້ນໃນອາທິດດຽວກັນ ອັນເປັນການເປີດບັ້ນຮົບລະດັບໂລກຢູ່ເມືອງຊຽງໃໝ່.*

*ຟີລິບ ຣິຊາກ ຜູ້ຈັດການຮ້ານໂອຊອງເວົ້າວ່າ: " ເປົ້າໝາຍຂອງຮ້ານ ຄືເອົາສິນຄ້າທຸກຢ່າງມາຮວມໄວ້ຢູ່ບ່ອນດຽວ ເພື່ອໃຫ້ລູກຄ້າເລືອກຊື້. ແຕ່ລະມື້ມີຄົນມາເຂົ້າຫລາຍຂຶ້ນເລື້ອຍໆ." ຮ້ານໂອຊອງມີພະນັກງານເກັບເງິນ 50 ຄົນແລະມີເນື້ອທີ່ກວ້າງ 8.360 ຕາແມັດ.*

*ນັກຂຽນເອົາຄຳເວົ້າອ້າງອີງຂຶ້ນສູງ ເພື່ອສະແດງຄ່ານິຍົມໃໝ່ຂອງການບໍລິໂພກນິຍົມຢູ່ໃນເມືອງຊຽງໃໝ່*

*ຮ້ານໂອຊອງສ້າງທາງລອດກ້ອງທາງຫລວງທີ່ຢູ່ໃກ້ຄຽງ ເພື່ອໃຫ້ລູກຄ້າຂັບລົດຈາກທຸກທິດທຸກທາງ ເຂົ້າມາຫາຮ້ານໄດ້ສະດວກ. ຮ້ານໃຫຍ່ນີ້ເຮັດໃຫ້ສະພາບຈາລະຈອນຕິດຂັດຢູ່ໃນຕົວເມືອງຫຍຸ້ງ*

ຍາກຂຶ້ນແລະເຮັດໃຫ້ການໃຊ້ຖະໜົນເປັນອັນຕະລາຍຫລາຍຂຶ້ນ. ຮ້ານເຫລົ່ານີ້ຍັງເລີ່ມຕົ້ນຍຸກໃໝ່ຂອງການສົ່ງຂີ້ເຫຍື້ອທາງໄປສະນີນຳອີກ. ໃບປີວໂຄສະນາພິມດ້ວຍເຈ້ຍມັນສີສົດໃສຖືກແຈກຢາຍໄປທົ່ວເມືອງ, ກອງຢູ່ໜ້າໂຕະ, ອັດແໜ້ນຢູ່ໃນຕູ້ໄປສະນີ, ສອດເຂົ້າກ້ອງປະຕູຫ້ອງການແລະປະຕູເຮືອນຂອງປະຊາຊົນ ສະແດງໃຫ້ເຫັນເຖິງຍຸກການແຂ່ງຂັນແລະການບໍລິໂພກໃນເມືອງຊຽງໃໝ່.

ນັກວິໄຈກຳລັງທົດສອບລະດັບສານຂີ້ກົ່ວໃນເລືອດຂອງຕຳຫລວດຈາລະຈອນຢູ່ເມືອງຊຽງໃໝ່ ຊຶ່ງແມ່ນການທົດສອບແບບດຽວກັນທີ່ເຮັດຢູ່ໃນກຸງເທບ ແລະຜົນທີ່ອອກມາແມ່ນເປັນຕາຢ້ານຫລາຍ. ນັກວິໄຈຕິດຕາມເບິ່ງແມ່ນ້ຳປິງທີ່ເປັນພິດ ຍ້ອນຢາຂ້າແມງໄມ້ທີ່ຊາວກະເສດຢູ່ເທິງທົ່ວນ້ຳພາກັນໃຊ້. ເມື່ອເມືອງເຕີບໃຫຍ່ຂະຫຍາຍໂຕຂຶ້ນ ກໍ່ມີຂີ້ເຫຍື້ອຫລາຍຂຶ້ນ ເກີນກຳລັງຂອງເຄື່ອງຈັກທີ່ຈະຈັດການແລະບຳບັດຂອງເສຍ.

*ຕົວຢ່າງເພີ່ມເຕີມເພື່ອສະໜັບສະໜູນວັກນຳແລະຫົວເລື່ອງຂອງຂ່າວ ໃຫ້ສັງເກດລາຍລະອຽດສະເພາະຕື່ມອີກ.*

ແນວໃດກໍ່ຕາມ ບັນຫາບໍ່ຄວນຈະບານປາຍອອກໄປ. ທາງການໄດ້ສັ່ງຫ້າມບໍ່ໃຫ້ສ້າງຕຶກສູງຢູ່ໃກ້ວັດວາອາຮາມ. ມີການກຳຈັດຂີ້ເຫຍື້ອແລະຕິດຕັ້ງລະບົບເຮັດໃຫ້ນ້ຳສະອາດຢູ່ຕາມຄັນຄູເມືອງເກົ່າ. ເມືອງຊຽງໃໝ່ມີປະຊາກອນພຽງແຕ່ໜຶ່ງສ່ວນສີ່ສິບຂອງຈຳນວນຄົນຢູ່ໃນກຸງເທບ.

*ນັກຂຽນໄດ້ພັນລະນາຫລາຍບັນຫາຂອງເມືອງ. ບັດນີ້ເຂົາຕ້ອງການໃຫ້ຜູ້ອ່ານບໍ່ເຂົ້າໃຈຜິດວ່າທຸກສິ່ງທຸກຢ່າງຊົ່ວຮ້າຍໄປໝົດ ຈຶ່ງເຮັດໃຫ້ຂ່າວມີຄວາມສົມດູນ ແລະໃຫ້ມຸມມອງແກ່ຂ່າວ*

ສິ່ງທີ່ຄົນເປັນຫ່ວງຫລາຍແມ່ນການປ່ຽນແປງວິຖີຊີວິດຂອງຄົນຢູ່ໃນເມືອງ.

*ຫຍໍ້ໜ້ານີ້ແມ່ນປະໂຫຍກເຊື່ອມຫາຫົວເລື່ອງສຳຄັນ: ບໍ່ພຽງແຕ່ການສ້າງສາທີ່ນັ້ນທີ່ປ່ຽນແປງໄປ ແຕ່ວິທີການດຳລົງຊີວິດແລະວັດທະນະທຳກໍ່ປ່ຽນແປງໄປນຳອີກ.*

*ສິ່ງທີ່ບໍ່ດີຕ່າງໆມັກເຊື່ອມໂຍງກັບກຸງເທບ, ມີການສໍ້ລາດບັງຫລວງໃນປີຜ່ານມາ ເມື່ອນາຍທະຫານແລະພະນັກງານເທດສະບານພະຍາຍາມຂູດຮີດເງິນຈາກຄົນຂາຍເຄື່ອງຢູ່ຕະຫລາດກາງຄືນ ຊຶ່ງເປັນແຫລ່ງທີ່ນັກທ່ອງທ່ຽວນິຍົມກັນໄປທ່ຽວຢູ່ໃນເມືອງ. ໃນປີກາຍນີ້ເຊັ່ນກັນ ຕຳຫລວດຜູ້ໜຶ່ງໂມໂຫທີ່ຜູ້ສາວຂອງຕົນໄປນຳຄົນຕ່າງປະເທດ ຈຶ່ງເອົາປືນຍິງແລະທຳຮ້າຍນັກທ່ອງທ່ຽວອິຕາລີສອງຄົນຢູ່ສະໜາມບິນຊຽງໃໝ່. ການແຜ່ລະບາດຂອງໂລກເອດສ໌ກໍ່ເປັນຕາຢ້ານຄືກັນກັບຢູ່ບາແຄງວພັດພົງໃນກຸງເທບ. ແຕ່ຍິ່ງຮ້າຍກວ່ານັ້ນ ຄືຕາມຊ່ອງໂສເພນີຢູ່ຊຽງໃໝ່ ມີເດັກນ້ອຍແມ່ຍິງຊຶ່ງມີອາຍຸບໍ່ເຖິງກະສຽນຂາຍບໍລິການທາງເພດຢູ່.*

*ທັງເບື້ອງຫລັງແລະຂໍ້ສັງເກດສະແດງໃຫ້ເຫັນປະເດັນກ່ຽວກັບວິທີການດຳລົງຊີວິດທີ່ປ່ຽນແປງໄປ.*

*ຄົນຈຳນວນຫລາຍມີຄວາມພູມໃຈທີ່ໄດ້ໃຊ້ໂທລະສັບມືຖື ຊຶ່ງເປັນເຄື່ອງໝາຍຂອງການແຜ່ລະບາດຂອງຄ່ານິຍົມຂອງຊາວໜຸ່ມຢູ່ກຸງເທບ. ຢູ່ໃນຮ້ານອາຫານທີ່ມີການບໍລິການອາຫານໃສ່ "ພາເຂົ້າ" ມີອາຫານໄທລົດຊາດເຜັດແບບພາກເໜືອກິນກັບເຂົ້າໜຽວ ແຕ່ນັກດົນຕີຊໍ້າພັດບໍ່ໄດ້ບັນເລງເພງທ້ອງຖິ່ນຂອງຕົນ ແຕ່ໄປຮອງເພງພື້ນເມືອງອາເມຣິກາຂອງ ຈອນ ເດນເວີພຸ້ນ.*

*ທ່ານ ອຸດົມ ຮຸ່ງເຮືອງສີ ຜູ້ອຳນວຍການສູນສົ່ງເສີມສິລະປະແລະວັດທະນະທຳມະຫາວິທະຍາໄລຊຽງໃໝ່ເວົ້າວ່າ: "ຄວາມໂລບແບບໃໝ່ກຳລັງລັກເອົາຄວາມລຽບງ່າຍຈາກພວກເຮົາໄປ."*

*ທ່ານ ອຸດົມໃຊ້ເວລາຫົກປີເຮັດສາລະນຸກົມວັດ*

ທະນະທຳໄທພາກເໜືອ. ທ່ານເອີ້ນສາລະນຸກົມນັ້ນວ່າ: “ປ້ອມສຸດທ້າຍ, ກຳແພງສຸດທ້າຍ ກ່ອນທີ່ອາລິຍະທຳຈະຫລົ້ມສະຫລາຍ.”

ທ່ານ ອຸດົມເວົ້າວ່າ ສາເຫດໜຶ່ງທີ່ວັດທະນະທຳກຳລັງຖືກຄຸກຄາມ ແມ່ນລະບົບການເມືອງແບບຮວມສູນຂອງໄທ. ສ່ວນໃຫຍ່ແລ້ວຊຽງໃໝ່ແມ່ນຖືກປົກຄອງໂດຍຂ້າລັດຖະການທີ່ສົ່ງມາຈາກກຸງເທບບໍ່ແມ່ນຄົນທ້ອງຖິ່ນ, ສະນັ້ນ ຄ່ານິຍົມຂອງກຸງເທບຈຶ່ງຄອບງຳຢູ່.

ຂໍ້ຄວາມທີ່ຍົກມາອ້າງສາມຂໍ້ຄວາມນີ້ຮຸນແຮງແລະກະທັດຮັດ. ມັນແມ່ນຂໍ້ຄວາມທີ່ທ່ານມັກຈະບໍ່ໄດ້ຍິນຈາກນັກວິຊາການ.




ວັດທະນະທຳຕ່າງກັນ
ແຕ່ກິນຄືກັນ

ທ່ານເວົ້າວ່າ: “ຂ້າພະເຈົ້າພະຍາຍາມສອນລູກສາວໃຫ້ເວົ້າສຳນຽງຊາວເໜືອ ແຕ່ລູກບໍ່ຍອມຮັບ

ເນື່ອງຈາກອິດທິພົນຈາກນາຍຄູ, ໝູ່ເພື່ອນແລະໂທລະພາບ.

*ນັກຂຽນໃຫ້ຂໍ້ສະຫລຸບໂດຍກັບຄືນຫາສາກຢູ່ຕອນເລີ່ມຕົ້ນໂດຍມີລາຍລະອຽດທີ່ມີສີສັນແລະສະເພາະເຈາະຈົງເຊັ່ນ ເດີມ. ການໃຫ້ຂໍ້ສັງເກດກ່ຽວກັບຜູ້ສາວເຮັດໃຫ້ຜູ້ອ່ານຄິດໜ້ອຍໜຶ່ງວ່າ ຂ່າວຈະຈົບລົງແນວນີ້. ຂ່າວລັກສະນະສາລະຄະດີບົດນີ້ຂຽນຂຶ້ນຢ່າງພິຖີພິຖັນ ໂດຍມີຕອນເລີ່ມຕົ້ນ, ຕອນກາງ ແລະຕອນຈົບແລະມີຫົວເລື່ອງຫລັກພຽງຫົວເລື່ອງດຽວ. ຄຳເວົ້າອ້າງອີງແລະລາຍລະອຽດນັ້ນກ່ຽວຂ້ອງກັບຫົວເລື່ອງທັງນັ້ນ.*

ນັກອະນຸລັກນິຍົມອື່ນໆຈົ່ມກ່ຽວກັບການສະແດງ "ວັດທະນະທຳ" ບາງຢ່າງທີ່ຂ້າລັດຖະການຜູ້ຮູ້ເລື່ອງວັດທະນະທຳທ້ອງຖິ່ນພຽງໜ້ອຍດຽວຈັດຂຶ້ນໃຫ້ນັກທ່ອງທ່ຽວຊົມ. ພວກເຂົາເຈົ້າເວົ້າວ່າປະຫວັດສາດແລະມໍລະດົກຂອງຊຽງໃໝ່ກຳລັງຖືກບິດເບືອນ, ຖືກນຳໄປໃຊ້ເພື່ອຄວາມບັນເທີງແລະຫາເງິນ ຫລາຍກວ່າເພື່ອການສຶກສາຫລືສົ່ງເສີມຄວາມນິຍົມຊົມຊອບໃນວັດທະນະທຳ. ຢູ່ໄນທ໌ ບາຊາຣ໌, ນັກສະແດງມັກຈະຈັດສະແດງຟ້ອນພື້ນເມືອງຢູ່ເປັນປະຈຳ ເພື່ອດຶງດູດລູກຄ້າເຂົ້າຮ້ານອາຫານ. ແມ່ຍິງໄທຈະນຸ່ງເຄື່ອງຊົນເຜົ່າລີຊໍ ແຕ່ສະແດງການຟ້ອນລຳຂອງເຜົ່າອາຂ່າ.

ທ່ານ ອຸດົມເວົ້າວ່າ ຄົນຊຽງໃໝ່ບໍ່ໄດ້ຖືວ່າວັດເປັນສ່ວນໜຶ່ງທີ່ແທ້ຈິງຂອງຊຸມຊົນອີກຕໍ່ໄປແລ້ວ ດຽວນີ້ຜູ້ຄົນໄປວັດສະເພາະແຕ່ຍາມຈຳເປັນ "ຄືກັນກັບໄປຮ້ານເຝີເວລາຫິວເຂົ້າ."

ໃນລະຫວ່າງທີ່ມີບຸນອິນທະຂິນເມື່ອບໍ່ດົນມານີ້ ມີຜົວເມຍຄູ່ໜຶ່ງຂັບລົດເກັງຮອນດາ ແອກຄອດສີຂາວຄັນໃໝ່ມາຈອດຢູ່ປະຕູເມືອງບູຮານສະໄໝສະຕະວັດທີ 13 ເປັນເວລາ 20 ວິນາທີ ແລ້ວຂັບອອກໄປ ຫລັງຈາກທີ່ສົ່ງຊອງເງິນບໍລິຈາກໃຫ້. ຢູ່ເທິງເຄື່ອງລຳໂພງກະຈາຍສຽງສູດມົນຂອງພະສົງມີແຜ່ນປ້າຍສີເຫລືອງຂະໜາດໃຫຍ່ ເຊື້ອເຊີນຜູ້ຄົນມາຟັງເທດ ແຕ່ການອະທິບາຍຢູ່ແຜ່ນປ້າຍນັ້ນມີສັນຍາລັກຂອງບໍລິສັດຂາຍໂທລະສັບມືຖື

*ລາຍໃຫຍ່. ບໍ່ໄກຈາກນັ້ນ ມີຜູ້ສາວສາມຄົນໂອ້ລົມກັນຢ່າງສະໜຸກສະໜານ ໃນຂະນະທີ່ຢືນເບິ່ງປ້າຍໂຄສະນາຂອງຮ້ານຊັບພະສິນຄ້າໃຫຍ່ບ່ອນໜຶ່ງໂດຍບໍ່ໄດ້ສົນໃຈນຳສຽງສູດມົນເລີຍ.*

## ໂຄງສ້າງອື່ນໆຂອງການຂຽນບົດຂ່າວລັກສະນະສາລະຄະດີ

ການຂຽນບົດຂ່າວລັກສະນະສາລະຄະດີມີຢູ່ຫລາຍປະເພດແລະການຈັດຮູບແບບກໍ່ມີຫລາຍວິທີ. ການສອນດ້ວຍຕຳລານັ້ນແມ່ນເຮັດໄດ້ຍາກ. ຖ້າຫາກທ່ານບໍ່ໝັ້ນໃຈວ່າຈະຈັດຮູບແບບສາລະຄະດີເລື່ອງນັ້ນແນວໃດ ທາງທີ່ດີທີ່ສຸດກໍ່ຄື ຂໍໃຫ້ບັນນາທິການຫລືຜູ້ຝຶກສອນທີ່ດີຊ່ວຍເບິ່ງໃຫ້.

ສາລະຄະດີປະເພດອື່ນໆມີດັ່ງນີ້:

- ບົດຂ່າວລັກສະນະສາລະຄະດີຫລືບົດວິເຄາະເຫດການຈາກຂ່າວດ່ວນ ແມ່ນການອະທິບາຍວ່າ ເກີດເຫດການຂຶ້ນແນວໃດ, ມີຄວາມໝາຍແນວໃດ ແລະແມ່ນຫຍັງຈະເກີດຂຶ້ນໃນຂັ້ນຕໍ່ໄປ ຕົວຢ່າງ: ເປັນຫຍັງພວກເດັກນ້ອຍຈຶ່ງຕາຍ ລະຫວ່າງທີ່ເກີດນ້ຳຖ້ວມໃນລະດູມໍລະສຸມຢູ່ຫວຽດນາມ ຫລືການຮັບສະມາຊິກໃໝ່ມີຄວາມໝາຍແນວໃດຕໍ່ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້.
- ຂ່າວທີ່ຄົນສົນໃຈ - ກ່ຽວກັບເລື່ອງສັດ, ເດັກນ້ອຍ, ໂສກນາຕະກຳ, ໄຊຊະນະໃນເຫດການທີ່ບໍ່ຄາດຝັນເປັນຕົ້ນ. ມັນອາດຈະສະໜຸກສະໜານຫລືໂສກເສົ້າກໍເປັນໄດ້. ເລື່ອງເຫລົ່ານີ້ສ້າງຄວາມສົນໃຈແກ່ຜູ້ອ່ານ.
- ປະຫວັດຄວາມເປັນມາຂອງບາງຄົນສະແດງໃຫ້

ເຫັນບຸກຄະລິກລັກສະນະຂອງຄົນຜູ້ນັ້ນ.

- ບົດຂ່າວທ່ອງທ່ຽວພັນລະນາລັກສະນະຂອງສະຖານທີ່.
- ບົດຂ່າວລັກສະນະສືບສວນ ໂດຍປົກກະຕິແລ້ວແມ່ນສະຫລັບສັບຊ້ອນ.

ການທີ່ຈະຂຽນເລື່ອງເຫລົ່ານີ້ໄດ້ ຈະຕ້ອງມີການວາງແຜນເປັນຢ່າງດີ, ມີການສຳພາດ, ການໄປຢ້ຽມຢາມສະຖານທີ່, ການຄົ້ນຄວ້າເອກະສານແລະການວິເຄາະເປັນຕົ້ນ. ເລື່ອງແບບນີ້ມັກລາຍງານສິ່ງທີ່ບຸກຄົນພະຍາຍາມປິດບັງຢູ່ ອາດຈະເປັນຄົນຢູ່ໃນລັດຖະບານຫລືໃນວົງການທຸລະກິດຂະໜາດໃຫຍ່ກໍ່ເປັນໄດ້.